II. ການພັດທະນາໃນເຂດຕົວແບບ

ແຜນພັດທະນາທີ່ນຳສະເໜີຮ່າງຂຶ້ນໃນຂັ້ນຕອນຂອງການສຶກສາທີ່ໄດ້ສະເໜີແລ້ວນັ້ນ ຈະໄດ້ປະຕິບັດເປັນຂັ້ນທົດລອງໃນເຂດຕົວແບບ 3 ແຫ່ງທີ່ໄດ້ຄົ້ນຄ້ວາ ແລະ ຄັດເລືອກແລ້ວໃນພາກການສຶກສາທີ່1. ພື້ນຖານຂອງການສ້າງແຜນພັດທະນາເຂດຕົວແບບ ມີຢູ່ ໃນຮູບທີ່ 5. ຫລັງຈາກການກະກຽມນະໂຍບາຍພື້ນຖານສຳຫລັບການພັດທະນາເຂດຕົວແບບພອມກັບການກ່າວອ້າງເຖິງສະພາບໂດຍທົ່ວໄປ ແລະ ການສັບຊອນວິທີການແບບມີສ່ວນຮ່ວມໃນເຂດຕົວແບບ, ແຜນພັດທະນາຮອບດ້ານທີ່ຈະໄດ້ກວດກາແລະ ກະກຽມ.

<u>ເຂດບ້ານທົ່ງຮາບ-ນາເຄືອ</u>, ເມືອງປາກກະດິງ, ແຂວງບໍລິຄຳໄຊ: ແມ່ນຕົວແບບການພັດທະນາ ການຈັດການອ່າງເກັບນ້ຳ ພ້ອມກັບການພັດທະນາການເງີນກະສິກຳ ແລະ ອົງການຊາວນາ.

<u>ເຂດບ້ານວັງຄ້ອງ</u>, ເມືອງຫີນບູນ, ແຂວງຄຳມ່ວນ: ຕົວແບບການກະສິກຳ ຊົນລະປະທານ ແບບປະສົມປະສານ ພອມກັບການຫລຸດຜ່ອນຄວາມທຸກຍາກໂດຍອາໄສຄວາມໝັ້ນຄົງຂອງການປູກເຂົ້າ ເພື່ອກຸ້ມຕົນເອງ.

<u>ເຂດບ້ານໂພນທັນ</u>, ເມືອງ ໄຊພູທອງ ແຂວງສະຫວັນນະເຂດ: ຕົວແບບການສະຫງວນອ່າງເກັບນ້ຳຂະໜາດນ້ອຍພອມກັບການສົ່ງເສີມການກະເສດກ້າວໜ້າ

1. ສະພາບທົ່ວໄປຂອງເຂດຕົວແບບ

1.1 ເຂດບ້ານທົ່ງຮາບ - ບ້ານນາເຄືອ

ເຂດຕົວແບບ ຢູ່ແຂວງບໍລິຄຳໄຊທີ່ໄດ້ຄັດເລືອກເພື່ອເຮັດການສຶກສາ ແມ່ນ ບ້ານທົ່ງຮາບ-ນາເຄືອ ຊຶ່ງຕັ້ງຢູ່ເມືອງປາກກະດິງ, ໃນເຂດນີ້ປະກອບມີ 5 ບ້ານເປົ້າໝາຍ ຕາມສາຍນ້ຳຫອນ ແລະ ນ້ຳເດື່ອ. ໃນເຂດນີ້ ລະບົບຊົນລະປະທານທີ່ໃຊ້ນ້ຳ ແມ່ນໄດ້ປະຕິບັດມາແລ້ວ ໃນແຕ່ລະບ້ານ ແລະການຈັດການນ້ຳຂອງເຂົາເຈົ້າປະກົດວ່າມີບັນຫາ. ເພາະສະນັ້ນມັນຈຶ່ງມີຄວາມຈຳເປັນຕອ້ງລວມກຸ່ມຜູ້ນຳໃຊ້ນ້ຳ ແບບປະສົມປະສານ ແລະ ເປັນອົງການຈັດການນ້ຳທີ່ກວ້າງຂວາງ. ພາຍໃນເຂດນີ້, ປະຊາຊົນໄດ້ມີປະສົບການອັນຂົມຂື່ນ ເນື່ອງຈາກວ່າຄັນຜາຍທີ່ສ້າງນັ້ນແມ່ນນຳໃຊ້ທຶນກູ້ຢືມ ຈາກ ທສກ ແລະ ຄັນຜາຍນັ້ນຖືກທຳລາຍດວ້ຍໄພນ້ຳຖ້ວມ ແຕ່ພວກເຂົາເຈົ້າຈະຕອ້ງໃຊ້ແທນເງີນກູ້ໃຫ້ ທສກ ໂດຍທີ່ບໍ່ໄດ້ນຳໃຊ້ຄັນຜາຍນັ້ນເລີຍ.

ໃນເຂດນີ້ມີເນື້ອທີ່ລວມທັງໝົດ12,000 ເຮັກຕາ, ລວມທັງເນື້ອທີ່ນາທັງໝົດ 728 ຮຕ ແລະເນື້ອທີ່ສາມາດຮັບນ້ຳຊົນລະປະທານໄດ້ 150 ຮຕ. ເນື້ອທີ່ສາມາດຮັບນ້ຳໄດ້ສ່ວນໃຫຍ່ແມ່ນຢູ່ເຂດບ້ານທົ່ງຮາບ, ໃນເຂດນີ້ມີທັງໝົດ 453 ຄອບຄົວ ຊຶ່ງແຕ່ລະຄອບຄົວມີຄົນສະເລີ່ຍ5-6 ຄົນ. ລາຍໄດ້ຫລັກຂອງເຂົາເຈົ້າແມ່ນການຜະລິດເຂົ້າ ຕາມດ້ວຍການເກັບເຄື່ອງປ່າຂອງດົງ ໂດຍບໍ່ມີການຕັດໄມ້ ແລະ ການລ້ຽງສັດ. 36% ຂອງຈຳນວນຄອບຄົວທັງໝົດ, 162 ຄອບຄົວແມ່ນບໍ່ສາມາດຈັບຈ່າຍ ຫລືຮັບປະກັນເຂົ້າກິນໃຫ້ກຸ້ມຕະຫລອດປີ. ຈຳນວນປະຊາກອນລວມມີ 2,522 ຄົນ, ອາຍຸ 14 ປີ ລົງໄປ ມີປະມານ 35%, ແລະ ອາຍຸ ຈາກ 14 ຫາ 45 ປີ ຊຶ່ງເໝາະກັບການເປັນກຳລັງແຮງງານ ມີປະມານ 26%.

ຈາກ"ແຜນພັດທະນາຂອງແຜນແມ່ບົດ"

ການຄັດເລືອກເຂດຕົວແບບ(ການແບ່ງລະດັບ/ການຄັດເລືອກແລະການຈັດສາກຂອງເຂດຕົວເລືອກ)

ເຂດທົ່ງຮາບ-ນາເຄືອ	ເຂດວັງຄອ້ງ	ເຂດໂພນທັນ
ຕົວແບບໃນການຄຸ້ມຄອງອ່າງນ້ຳໂດຍການປັບປຸງດ້ານການເງິນກະສິກຳ ແລະ ການປັບປຸງອົງການຊາວນາ	ຕົວແບບການກະສິກຳນຳໃຊ້ຊົນລະປະທານແບບປະສົມປະສານຈຸດປະສົງເພື່ອລຸດຜອ່ນຄວາມຍາກຈົນໂດຍການກະສິກຳທີ່ໝັ້ນຄົງ ແລະ ກັມຕົນເອງ	ຕົວແບບການສະຫງວນອ່າງນ້ຳຂະໜາດນອ້ຍ ດ້ວຍການສົ່ງເສີມການກະສິກຳທີ່ກ້າວໜ້າ

ການກວດກາ/ການປະເມີນຂອງວິທີການແບບມີສ່ວນຮ່ວມ
(ການປອັນກັບຂອງຜົນຂອງການວາງແຜນເບື້ອງຕົ້ນ)

- ການສ້າງ/ການບໍລິຫານຂອງທີມງານສະເພາະກິດ
- ກອງປະຊຸມການຄຸ້ມຄອງວົງຈອນໂຄງການ
- ການກະກຽມແລະການປອັນກັບຂອງແຜນອອກແບບໂຄງການ

ການຮ່ວມ ມື

ການສຳຫລວດລະອຽດຂອງເຂດຕົວແບບ

- ການສຳຫລວດສະໜາມ/ເກັບກຳສະຖິຕິແລະຂໍ້ມູນ
- ການສຳຫລວດເສດຖະກິດສັງຄົມ(ຕົວຢ່າງຈາກຊາວນາ)
- ການສ້າງແລະການບໍລິຫານຂອງທີມງານສະເພາະກິດ
- ກອງປະຊຸມການຄຸ້ມຄອງວົງຈອນໂຄງການ(ຜູ້ສັງເກດການ)

ກິດຈະກຳພື້ນຖານ ຂອງທີມງານສະເພາະ ກິດ

ກິດຈະກຳພື້ນຖານຂອງພ/ງ ລົງເລິກວິຊາສະເພາະ

ຂໍ້ຍຸ້ງຍາກຂອງການພັດທະນາ/ທ່າແຮງຂອງແຫລ່ງຕ່າງໆໃນເຂດຕົວແບບ

ຂໍ້ຍຸ້ງຍາກ

- ການຈຳກັດຂອງວິທີການແບບເທິງລົງລຸ່ມ
- ຍາກສຳຫລັບຄວາມຍືນຍົງຄົງຕົວຂອງຫົວງານທີ່ມີຢູ່
  - +ການຈຳກັດດ້ານການເງິນສຳຫລັບສະແດງບົດບາດ
  - +ທສກມີຄວາມສາມາດຕ່ຳໃນການເພີ້ມຄວາມຕອ້ງການສິນເຊື່ອກະສິກຳ
- ລະດັບເຕັກນິກຂອງພ/ງແຂວງ ແລະເມືອງຍັງຕ່ຳ
- ລະດັບການພັດທະນາໂຄງລ່າງພື້ນຖານຕ່ຳ

ທ່າແຮງ

ການສ້າງໂຄງການໂດຍວິທີການແບບມີສ່ວນຮ່ວມ
(ການກວດກາແຜນອອກແບບໂຄງການແລະການສ້າງໂຄງການລວມທັງຄວາມຕັ້ງໃຈຂອງຜູ້ໃດ້ຮັບຜົນປະໂຫຍດ)

ປັດໃຈນຳເຂົ້າ	ການຄຸ້ມຄອງ	ເຂດໂພນທັນ
-ການສະໜອງທີ່ສະດວກຂອງວັສດຸກະສິກຳແລະການບໍລິການ -ການຈັດຫາທຶນ	-ການພັດນາໂຄງລ່າງພື້ນຖານ -ເຕັກໂນໂລຍີ່ທີ່ເໝາະສົມ -ການຈັດຕັ້ງຄຸ້ມຄອງຫົວງານ -ອົງການຈັດຕັ້ງ	ຕົວແບບການສະຫງວນອ່າງນ້ຳຂະໜາດນອ້ຍ ດ້ວຍການສົ່ງເສີມການກະສິກຳທີ່ກ້າວໜ້າ

ການປະຕິບັດການຍົກລະດັບຊາວແລະຕົວແທນຂອງລັດ
(ປັບປຸງໂຄງຮ່າງການປະຕິບັດ ແລະອົບຮົມພະນັກງານເພື່ອການປະຕິບັດທີ່ດີ)

ຄວາມຈະແຈ້ງຈອງບົດບາດ ແລະ ຄວາມຮັບຜິດຊອບຂອງຄົນກາງ

- ການແບ່ງເຂດຂອງບົດບາດເພື່ອການປະຕິບັດໂຄງການ ແລະການຈັດຕັ້ງຄຸ້ມຄອງ
- ຄວາມຈະແຈ້ງຂອງຫລັກການແບ່ງປັນລາຄາ
- ຄວາມເຊື່ອໝັ້ນແລະຄວາມເຂົ້າໃຈຊື່ງກັນແລະກັນ

ລາຍໄດ້ສະເລັ່ຍຕໍ່ຄອບຄົວປະມານ 9,155,757 ກີບ, ລາຍໄດ້ສູງສຸດປະມານ 39,194,80 ກີບ ແລະ ຕ່ຳສຸດປະມານ 436,000 ກີບ. ມັນເປັນໜ້າສັງເກດຢູ່ວ່າລາຍໄດ້ສ່ວນໃຫຍ່ຂອງຄອບຄົວທີ່ຮັ່ງມີ ແມ່ນໄດ້ມາຈາກການລ້ຽງສັດ ຫລາຍກວ່າການຜະລິດກະສິກຳ. ເຖິງແນວໃດກໍ່ຕາມ, ຕາມຮີດຄອງປະເພນີແລ້ວ ການລ້ຽງສັດ ແມ່ນການລົງທຶນ ເພື່ອເປັນຕົ້ນທຶນ ແລະ ການຂາຍສັບສິນເຫລົ່ານີ້ກໍ່ເພື່ອໃຊ້ເປັນການສຳລະໜີ້, ເປັນທຶນໃນເຫດການທາງວັດທະນະທຳ (ເຊັ່ນ, ແຕ່ງດອງ, ເຮັດບຸນເຮືອນ ແລະ ພິທີອື່ນໆ) ແລະ ເພື່ອຊື້ອຸປະກອນການກະເສດ. ລາຍໄດ້ ແລະ ລາຍຈ່າຍ ໂດຍທົ່ວໄປແລ້ວແມ່ນດຸ່ນດ່ຽງກັນ ບາງຄັ້ງເຫລືອເລັກນອ້ຍ. ເຖິງແນວໃດກໍ່ຕາມ, ກຳໄລສຸດທິຫລັງຈາກຫັກຄ່າແຮງງານແລ້ວ ການດຸ່ນດ່ຽງກາຍເປັນລົບ ໃນຈຳນວນ 18 ຄອບຄົວ ແລະ ມີພຽງ 10 ຄອບຄົວທີ່ສາມາດເກັບອອມໃວ້ຕ່ຳກວ່າ 1 ລ້ານກີບ ຊຶ່ງເປັນຈຳນວນພຽງເລັກນອ້ຍ.

1.2 ເຂດວັງຄ້ອງ

ເຂດບ້ານວັງຄ້ອງແມ່ນຕັ້ງຢູ່ເມືອງຫີນບູນ ແລະມີປະມານ 10 ກລມ ເທົ່ານັ້ນຈາກເສັ້ນທາງເລກທີ່ 13 ພອ້ມກັບມີທາງເຂົ້າ. ປາກນ້ຳຫີນບູນ ເປັນທ່າເຮືອຂົນສົ່ງສິນຄ້າຂອງເມືອງ ລະຫວ່າງປະເທດລາວກັບປະເທດໄທ ຊຶ່ງໄລຍະໄກປະມານ 1,5 ກມ ແລະເປັນບ່ອນທີ່ແລກປ່ຽນສິນຄ້າດ້ານການກະເສດ. ພື້ນທີ່ຕົວແບບ ແມ່ນຕັ້ງຢູ່ທີ່ງພຽງນ້ຳຖ້ວມໃກ້ກັບປາກນ້ຳຫີນບູນ ປະມານ 2 ກມ ຈາກແມ່ນ້ຳຂອງ. ການຖວ້ມຂອງນ້ຳ ແມ່ນອີງໃສ່ການຕໍ່ເນື່ອງຂອງການໄຫລບ່າຂອງແມ່ນ້ຳຂອງ ຊຶ່ງເກີດຂຶ້ນໃນບໍ່ລິເວນນັ້ນ, ຄວາມກະຕືລືລົ້ນຂອງຊາວບ້ານ ສຳຫລັບການສົ່ງເສີມການກະສິກຳໂດຍການນຳໃຊ້ຊົນລະປະທານ ແມ່ນມີສູງ. ປັດຈຸບັນນີ້ ຊາວບ້ານໄດ້ຖືກຈັດຕັ້ງໃຫ້ເຮັດການກະສິກຳແບບບໍ່ໝັ້ນຄົງ ເນື່ອງຈາກຂາດລະບົບຊົນລະປະທານ, ລະດັບຄວາມທຸກຍາກມີສູງ ໃນບັນດາຕົວແບບ ທັງສາມແຫ່ງ. ຢູ່ໃນເຂດນີ້, ວິທີການພັດທະນາແບບມີສ່ວນຮ່ວມ ແມ່ນຈະມຸ້ງໄປສູ່ການກຸ້ມຕົນເອງດ້ານເຂົ້າກິນ ແລະ ມັນຈຳເປັນຈະຕອ້ງໄດ້ຂະຫຍາຍການຖ່າຍທອດເຕັກໂນໂລຍີ ດ້ວຍການຈັດຕັ້ງກຸ່ມ/ອົງການຊາວນາ ການປະຕິບັດການກະສິກຳ ແລະການຈັດການນ້ຳ.

ເນື້ອທີ່ດິນທັງໝົດ ມີ 4,550 ຮຕ ເນື້ອທີ່ນາປີ ມີ 52 ຮຕ ພາຍໃນບ້ານບໍ່ມີລະບົບຊົນລະປະທານ. ນອກຈາກນາປີແລ້ວ ຍັງມີເນື້ອທີ່ປ່າພຸ່ມປະມານ 55 ຮຕ ທີ່ຈະບຸກເບີກໃຫ້ເປັນນາ. ໃນປະຈຸບັນນີ້ ສະຖານີສູບນ້ຳແບບແພລອຍ ກຳລັງຢູ່ໃນໄລຍະການກໍ່ສ້າງໂດຍລັດຖະບານ ແລະ ຊາວນາແມ່ນໄດ້ຈັດໃຫ້ຂຸດຄອງເໝືອງ. ສຳຫລັບບ້ານນີ້ ແມ່ນໄດ້ສ້າງຂຶ້ນປະມານ ປີ 1944 ແລະ ມີຄອບຄົວຕົວຈິງຢູ່ 47 ຄອບຄົວ, ຈຳນວນພົນ 246 ຄົນ ພອ້ມກັບຫົວຄົນສະເລັ່ຍ 5-6 ຄົນ/ຄອບຄົວ, ຊາວໜຸ່ມທີ່ມີອາຍຸແຕ່ 1-14 ປີ ກວມ 48,4% ຂອງຈຳນວນປະຊາກອນໝົດບ້ານ, ຊົນເຜົ່າສວ່ນໃຫຍ່ແມ່ນກະເລິງ ຊຶ່ງເປັນສາຂາໜຶ່ງຂອງຊົນເຜົ່າພູໄທ. ອີງຕາມຕົວຢ່າງການສຳຫລວດເສດຖະກິດສັງຄົມ ໃນຈຳນວນ10 ຄອບຄົວ ລາຍໄດ້ສະເລັ່ງຕໍ່ປີ ຕໍ່ຄອບຄົວປະມານ 6,245,170 ກີບ, ຄອບຄົວທີ່ມີລາຍໄດ້ຕ່ຳສຸດປະມານ 2,214,800 ກີບ ແລະ ຄອບຄົວທີ່ມີລາຍໄດ້ສູງທີ່ສຸດ ປະມານ 22,556,000ກີບ. ເປັນທີ່ໜ້າສັງເກດຢູ່ວ່າ ລາຍໄດ້ສວ່ນໃຫຍ່ແມ່ນມາຈາກການຂາຍສັດລ້ຽງ ຊຶ່ງຖືວ່າເປັນການໂອນຕົ້ນທຶນໃນບ້ານໃຫ້ເປັນເງິນສົດ. ລາຍໄດ້ສະເລ່ຍຕໍ່ຫົວຄົນໃນບ້ານປະມານ 993,317 ກີບ.

1.3 ເຂດບ້ານໂພນທັນ

ເຂດຕົວແບບນີ້ແມ່ນຕັ້ງຢູ່ໃນເຂດເມືອງໄຊພູທອງ ແຂວງສະຫວັນນະເຂດ, ຈາກຫລັກ35 ເສັ້ນທາງເລກທີ່ 13 ເຂົ້າໄປ ປະມານ 35 ກມ ດວ້ຍເສັ້ນທາງທີ່ດີປານກາງ. ໃນເຂດນີ້ , ລະບົບຊົນລະປະທານ ແບບໄຫລເອງ ໄດ້ຮັບຜົນສຳເລັດໂດຍການນຳໃຊ້ອ່າງເກັບນ້ຳຂະໜາດນອ້ຍ ຊຶ່ງກໍ່ສ້າງໂດຍຊາວນາເອງ ແລະ ລະດັບເຕັກນິກໃນການກໍ່ສ້າງຄອງເໝືອງເປັນທີ່ໜ້າພໍໃຈ. ໃນແຕ່ລະປີປະລິມານນ້ຳໃນອ່າງແມ່ນບັນລຸເຖິງລະດັບຄວາມສາມາດບັນຈຸຂອງອ່າງ, ມັນມີຄວາມເປັນໄປໄດ້ທີ່ຈະເພີ້ມເນື້ອທີ່ຮັບນ້ຳ ໂດຍການເພີ້ມຄັນດູອ່າງໃຫ້ສູງຂຶ້ນ. ນອກຈາກນັ້ນ, ໃນອ່າງຍັງມີຄວາມສາມາດລ້ຽງປາ ແລະ ເຮັດກະເສດສຸມ ເຊັ່ນປູກຜັກ ແລະ ລ້ຽງສັດອື່ນໆ. ຍິ່ງໄປກວ່ານັ້ນ, ມັນຍັງເປັນໄປໄດ້ ທີ່ຈະປັບປຸງການຈັດການນ້ຳ ໂດຍການນຳໃຊ້ລະບົບຊົນລະປະທານແບບໄຫລເອງ ແລະ ການຈັດການອ່າງນ້ຳ ພອ້ມກັບການອະນຸລັກ ໂດຍການປັບປຸງກຸ່ມຜູ້ນຳໃຊ້ນ້ຳທີ່ມີຢູ່ໃນປະຈຸບັນ.

ຢູ່ໃນເຂດຕົວແບບນີ້ມີສາມບາ້ນ: ບາ້ນນາຄຳເໜືອ, ບ້ານນາຄຳໃຕ້ ແລະ ບ້ານໂພນທັນ ທັງໝົດນີ້ຕັ້ງຢູ່ຫ່າງໄກຈາກຕົວເມືອງ ສະຫວັນນະເຂດໄປທາງທິດໃຕ້ປະມານ 55 ກມ. ເນື້ອທີ່ລວມຂອງເຂດ ປະມານ 2,157 ຮຕ, 600 ຮຕ ແມ່ນດິນນາທັງໝົດ, 520 ຮຕ ແມ່ນນານ້ຳຝົນ ແລະ 55 ຮຕ ແມ່ນເນື້ອທີ່ຮັບນ້ຳຊົນລະປະທານ. ບ້ານໂພນທັນສ້າງຂຶ້ນໃນປີ 1673 ຊຶ່ງຖືວ່າເປັນ ຮາກເຫງົ້າ ຫລື ແຫລ່ງກຳເນີດຂອງຊຸມຊົນໃນເຂດນີ້. ປະຊາກອນຂອງສາມບ້ານນີ້ແມ່ນເປັນຊົນເຜົ່າກຸ່ມນອ້ຍອັນດຽວກັນ. ກິດ ຈະກຳຫລັກດ້ານເສດຖະກິດ ແມ່ນການເຮັດນາ, ປະມານ 54% ຂອງປະຊາກອນແມ່ນຕິດພັນກັບການກະສິກຳ. ໃນເຂດມີ 412 ຄອບຄົວ, ສະເລັ່ຍແຕ່ລະຄອບຄົວມີປະມານ 5.9 ຄົນ. ລາຍໄດ້ຫລັກແມ່ນມາຈາກການປູກເຂົ້າ, ລ້ຽງສັດ, ແລະປູກພືດ ເປັນສິນຄ້າ (ເຊັ່ນ: ກວ້ຍ, ໝາກໂມ,ໝາກແຕງ, ສາລີ). ໃນຈຳນວນຄອບຄົວທັງໝົດ ມີ 11% ຫລື 46 ຄອບຄົວທີ່ພົບຄວາມ ຍຸ້ງຍາກໃນການຜະລິດເຂົ້າໃຫ້ກຸ້ມຕົນເອງ.

2. ນະໂຍບາຍການພັດທະນາພື້ນຖານ.

2.1. ແຜນການພັດທະນາກະສິກຳ

ແນວຄວາມຄິດພື້ນຖານການພັດທະນາກະສິກຳໃນເຂດເນື້ອທີ່ຕົວແບບໄດ້ຖືກສ້າງລວມດັ່ງຕໍ່ໄປນີ້:

- ການເສີມສ້າງການຜະລິດເຂົ້າໃຫ້ໝັ້ນຄົງ (ເພື່ອຮັບປະກັນອາຫານພື້ນຖານ)
- ການສະເໜີ ແລະ ສົ່ງເສີມການປູກພືດຫຼາຍສະນິດ ແລະ ການກະເສດແບບປະສົມປະສານ (ເພື່ອຫຼີກເວັ້ນການຜະລິດ ຜະລິດຕະພັນອັນດຽວທີ່ບໍ່ສາມາດຈຳໜ່າຍໄດ້ ແລະ ເພື່ອຮັບປະກັນການສ່ຽງໄພໃນການຜະລິດ ເພື່ອຮັບປະກັນລາຍຮັບ ແລະ ປັບປຸງຄຸນນະພາບຂອງສະບຽງອາຫານ. ເພື່ອປະຕິບັດລະບົບການກະເສດເຄິ່ງກະເສດສຸມ ໂດຍການຜະລິດແລະນຳໃຊ້ຝຸ່ນທຳມະຊາດທີ່ຜະລິດເອົາເອງ).
- ການສົ່ງເສີມອຸດສາຫະກຳໝູ່ບ້ານ ແລະ ການສະເໜີພືດໃໝ່ (ເພື່ອປັບປຸງເສີມຂະຫຍາຍລາຍຮັບ ແລະ ຮັບປະກັນການສ່ຽງໃນການຜະລິດ.

2.2. ແຜນການນຳໃຊ້ທີ່ດິນ

ນະ�โยบายพื้นฐานสำลับการนำใช้เนื้อที่ดินปูกเข้า (ເນື້ອທີ່ນາ) ມີດັ່ງຕໍ່ໄປນີ້:

- ເພື່ອຮັກສາສະພາບ ນຳໃຊ້ທີ່ດິນທີ່ມີຢູ່ປັດຈຸບັນ
- ເພື່ອສ້າງໃຫ້ມີການຜະລິດກະສິກຳທີ່ໝັ້ນຄົງ ແລະຍືນຍົງ
- ເພື່ອຜະລິດເຂົ້າຜ່ານການນຳໃຊ້ຊັບພະຍາກອນແຫຼ່ງນ້ຳ ໃຫ້ມີປະສິດຕິຜົນ.

ປະຕິບັດຕາມບັນດານະໂຍບາຍດັ່ງກ່າວນີ້, ຮູບແບບການຜະລິດພືດແມ່ນສະເໜີດັ່ງລຸ່ມນີ້. ຮູບແບບດັ່ງກ່າວ ໄດ້ຖືກຈັດຂຶ້ນຕາມສະຖານະການທີ່ຍັງບໍ່ມີອາຄານປ້ອງກັນນ້ຳຖ້ວມ ແລະ ເຂດເນື້ອທີ່ນ້ຳຖ້ວມແມ່ນໄດ້ຖືກນຳໃຊ້ ໂດຍການປັບປຸງຮູບແບບຜະລິດພືດທີ່ຫຼີກເວັ້ນນ້ຳຖ້ວມ.

ນ້ຳຖ້ວມ	ຊົນລະປະທານ	ລະດູຝົນ	ລະດູແລ້ງ	ເຂດຕົວແບບ
ຖືກກະທົບ	ມີຊົນລະປະທານ	ພືດໄຮ່ ບໍ່ມີການປູກພືດ	ເຂົ້ານາແຊງ	TN, V
ຖືກກະທົບ	ມີຊົນລະປະທານ	ເຂົ້ານາປີ ເຂົ້ານາຕ່າວ	ເຂົ້ານາແຊງ	TN, V
ຖືກກະທົບ	ບໍ່ມີ	ພືດໄຮ່		TN, V
ບໍ່ຖືກກະທົບ	ມີຊົນລະປະທານ	ເຂົ້ານາປີ	ເຂົ້ານາແຊງ	P
ບໍ່ຖືກກະທົບ	ບໍ່ມີ	ເຂົ້ານາປີ		P

TN: ທົ່ງຮາບ ນາເຄື່ອ, V: ວັງຄ້ອງ, P: ໂພນທັນ

2.3. ການທົດລອງນຳໃຊ້ທີມງານສະເພາະກິດ (TFT) ແລະ ການກວດກາຄືນຄວາມເປັນໄປໄດ້ທີ່ຈະຂະຫຍາຍແນວຄວາມຄິດ TFT.

ຂະບວນສ້າງແຜນການພັດທະນາເຂດເນື້ອທີ່ຕົວແບບ ໄດ້ຖືເປັນການທົດສອບວິທີການວາງແຜນແບບມີສ່ວນຮ່ວມ ທີ່ໄດ້ເລີ່ມຈາກການຂັດເລືອກເອົາບັນດາພື້ນທີ່ທີ່ເປັນເປົ້າໝາຍເປັນຕົວແບບ. ທີມງານສະເພາະກິດ ໄດ້ຖືເປັນປັດໄຈ ຕັດສິນການປະຕິບັດໂຄງການໃນອານາຄົດ. ໃນການສຶກສາທີມງານສະເພາະກິດໄດ້ເຄື່ອນໄຫວຕົວຈິງ ໃນກິດຈະການ ສຳຫຼວດຮ່ວມກັບທີມງານສຶກສາ. ການຈັດຕັ້ງປະຕິບັດກິດຈະການສຳຫຼວດ ໄດ້ໃຫ້ທີມງານສຶກສາສາມາດຕີລາຄາ ປະສິດຕິຜົນຂອງທີມງານສະເພາະກິດ ພ້ອມທັງຂໍ້ຈຳກັດຕ່າງໆເຮັດແນວໃດໃຫ້ລັດຖະບານລາວ ນຳເອົາແນວຄວາມຄິດ ຂອງທີມງານສະເພາະກິດນີ້ ເປັນພື້ນຖານໃຫ້ແກ່ການພັດທະນາໃນອານາຄົດ.

ມີຄວາມຄາດຫວັງວ່າ ການປະຕິບັດຂະບວນການມີສ່ວນຮ່ວມໃນເຂດພື້ນທີ່ຕົວແບບ ຈະໄດ້ຖືກຂະຫຍາຍພາຍໃນ ແລະພາຍນອກພື້ນທີ່ສຶກສາ. ການປະຕິບັດຮອບໝູນວຽນຂອງການພັດທະນາຊົນນະບົດໃຫ້ໄດ້ດີ ແມ່ນຈະຕ້ອງ ໄດ້ມີການປະກອບສ່ວນແຕ່ໄລຍະການວາງແຜນໂຄງການ ເຖິງການຈັດຕັ້ງປະຕິບັດໂຄງການ.

3. ການປະຕິບັດແນວຄວາມຄິດການມີສ່ວນຮ່ວມ- ກວດຄືນການອອກແບບໂຄງປະກອບໂຄງການ (PDM)

ໄດ້ມີການອອກແບບໂຄງປະກອບໂຄງການພັດທະນາຈາກຜົນຮັບຂອງການດຳເນີນກອງປະຊຸມສຳມະນາການວາງແຜນໂຄງ ການ (PCM Workshop) ຢູ່ທີ່ເຂດພື້ນທີ່ຕົວແບບ 3 ແຫ່ງ ກອງປະຊຸມສຳມະນາດັ່ງກ່າວໄດ້ລະດົມແນວຄວາມຄິດແລະ ຄວາມມຸ້ງຫວັງຂອງປະຊາຊົນໃນຊົນນະບົດເຂດດັ່ງກ່າວ. ທີມງານສຶກສາ ໄດ້ຮັບຮູ້ວ່າໂຄງປະກອບໂຄງການພັດທະນາທີ່ໄດ້ ອອກແບບມານັ້ນໄດ້ຊ່ອງແສງເຖິງຄວາມຕ້ອງການອັນຈຳເປັນແລະຮີບດ່ວນຂອງປະຊາຊົນເຂດດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ ບັນດາໂຄງປະກອບ ໂຄງການພັດທະນາຍັງໄດ້ຖືກສຶກສາຄົ້ນຄວ້າເພີ້ມເຕີມເພື່ອສ້າງແຜນການພັດທະນາທີ່ເຫມາະສົມທີ່ໄດ້ ຄຳນຶງເຖິງຫລາຍຊ່ອງທາງພັດທະນາ ພ້ອມທັງຄຳນຶງເຖິງສະພາບດ້ານຊັບພະຍາກອນແລະບຸກຄະລາກອນທີ່ມີຢູ່ສະພາບຊີວະ ພາບ, ສະພາບຫນ້າດິນ, ຄຸນນະພາບດິນແລະນ້ຳ, ສະພາບອາກາດ, ຜົນກະທົບດ້ານສິ່ງແວດລ້ອມ, ຄວາມສາມາດດ້ານງົບ ປະມານທຶນຮອນແລະດ້ານບຸກຄະລາກອນຂອງບັນດາຫນ່ວຍງານທີ່ກ່ຽວຂ້ອງຈຸດທີ່ສຳຄັນຂອງການສຶກສາຄົ້ນຄວ້າຄັ້ງນີ້ໄດ້ຊີ້ ແຈ້ງໃຫ້ບັນດາຊາວບ້ານທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການວ່າຄວາມມຸ້ງຫວັງການພັດທະນາຂອງເຂົາເຈົ້າແມ່ນຈະບໍ່ສາ ມາດເກີດຂຶ້ນໄດ້ຢູ່ສະເຫມີ ຍ້ອນຫລາຍສາຍເຫດທີ່ກ່ຽວພັນກັບສິ່ງແວດລ້ອມແລະສະພາບທີ່ກ່າວມາຂ້າງເທິງນີ້. ບັນດາຊ່ຽວ ຊານຍັງໄດ້ໃຫ້ຄຳແນະນຳວ່າໂຄງການຈະຕ້ອງມີຄວາມຜ່ອງໄສແລະແທດເຫມາະກັບລະດັບເຕັກນິກແລະຄວາມຮູ້ພື້ນຖານທີ່ ເຫມາະສົມ.

ຂະບວນການຄົ້ນຄວ້າເພື່ອວິເຄາະຄວາມເປັນໄປໄດ້ຂອງໂຄງການຍັງໄດ້ສຶກສາເບິ່ງການເລີ່ມສ້າງຄວາມສາມາດຂອງຊາວກະສິກອນທີ່ໄດ້ຮັບຜົນປະໂຫຍດພ້ອມດຽວກັນກັບພະນັກງານລັດຖະບານທີ່ຮັບຜິດຊອບໃນການຊຸກຍູ້ຊ່ວຍເຫລືອຊາວກະສິກອນ. ຈຸດນີ້ຖືເປັນອັນສຳຄັນແລະຮີບດ່ວນ, ໂດຍກ່ຽວພັນກັບການພັດທະນາກໍ່ສ້າງພື້ນຖານຊົນນະບົດໄດ້ມີການພິຈາລະນາໃຫ້ການສຶກສາແລະການຝຶກອົບຮົມພະນັກງານວິຊາການຂອງພະແນກກະສິກຳປ່າໄມ້ແຂວງໃຫ້ກາຍເປັນພະນັກງານວິຊາສະເພາະລົງເຫລັກ. ໃນຂະບວນການຄົ້ນຄວ້າສ້າງໂຄງການໄດ້ມີການກຳນົດບັນດາຈຸດສຳຄັນດັ່ງລຸ່ມນີ້:

- ໃນຂອບການພັດທະນາໂຄງລ່າງພື້ນຖານດັ່ງການກໍ່ສ້າງລະບົບຊົນລະປະທານ, ການກໍ່ສ້າງທາງຊົນນະບົດເຊັ່ນດຽວກັນກັບການກໍ່ສ້າງສະຖານທີ່ ຫລື ສາງເກັບມ້ຽນຜົນຜະລິດກະສິກຳການກໍ່ສ້າງພື້ນຖານດັ່ງກ່າວຈະຕ້ອງແທດເຫມາະກັບສະພາບທ້ອງຖິ່ນ.
- ໃນການຝຶກອົບຮົມຊາວກະສິກອນທີ່ຖືເປັນກິດຈະການຊຸກຍູ້ຊ່ວຍເຫລືອເພື່ອເພີ້ມທະວີການຜະລິດເຂົ້າ ແລະ ການຜະລິດສັດລວມທັງການຜະລິດລ້ຽງປາແລະປະມົງ. ການຝຶກອົບຮົມຊາວກະສິກອນຈະເລັ່ງໃສ່ການຝຶກຊາວນາຕົວແບບໂດຍພິຈາລະນາເຖິງສະພາບຄວາມເປັນຈິງຂອງລະບົບຝຶກອົບຮົມຊາວນາທີ່ມີຢູ່ປັດຈຸບັນ.
- ໃນອານາຄົດຫລັກການພື້ນຖານກ່ຽວກັບສ່ວນຮ່ວມຂອງຊາວກະສິກອນໃນການບໍລິການດ້ານວິຊາການຈະເປັນປັດໄຈອັນນຶ່ງທີ່ສາມາດປະຕິບັດໄດ້ໂດຍມີການກຳນົດ, ບັນດາໄມ້ງົດເສດຖະກິດໃຫ້ແກ່ພະນັກງານສົ່ງເສີມທີ່ອີງຕາມປະສິດທິພາບຂອງວຽກງານສົ່ງເສີມຂອງເຂົາເຈົ້າ.
- ຈະໄດ້ພິຈາລະນາຢ່າງຮີບດ່ວນກ່ຽວກັບການເຮັດໃຫ້ລະບົບສະຫນອງແລະຈຳລະຈອນວັດຖຸປັດໄຈການຜະລິດໄດ້ກະທັດລັດແລະສະດວກຂຶ້ນ ເວົ້າສະເພາະທັງຢູ່ໃນລະບົບການເງິນຂອງທະນາຄານສົ່ງເສີມກະສິກຳ (ທສກ) ແລະລະບົບການສະຫນອງວັດຖຸປັດໄຈການຜະລິດຂອງບັນດາບໍລິສັດສະບຽງຂອງແຂວງ.
- ເນື່ອງຈາກວ່າການລ້ຽງສັດໃຫ່ຍໃນເຂດສຶກສາໄດ້ມີທຳລຸດລົງຍ້ອນມີການນຳໃຊ້ກົນຈັກຫລາຍຂຶ້ນໃນການຜະລິດກະສິກຳໄປພ້ອມດຽວກັນສະຖານທີ່ລ້ຽງສັດໃຫ່ຍແມ່ນນັບມື້ນັບນ້ອຍລົງໃນເຂດທົ່ງພຽງການສຶກສາຈຶ່ງໄດ້ວາງບຸລິມະສິດໃນການສົ່ງເສີມການລ້ຽງສັດນ້ອຍແລະລ້ຽງສັດປີກ.
- ໃນການສົ່ງເສີມການລ້ຽງປາ, ໄດ້ມີຈຸດເລັ່ງໃນການສ້າງລະບົບການລ້ຽງປາທີ່ທັນສະໄຫມຂຶ້ນໂດຍການນຳໃຊ້ວັດຖຸທອນຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນ, ຊາວກະສິກອນຈະເປັນຜູ້ເພາະລູກປາດ້ວຍຕົນເອງ.

ສະເພາະແຜນການພັດທະນາລະບົບຊົນລະປະທານທີ່ລະບຸໄວ້ໃນໂຄງປະກອບຂອງແຜນພັດທະນາຂອງແຕ່ລະເຂດພື້ນທີ່ຕົວແບບທີ່ຈະສະຫນອງໂຄງສ້າງພື້ນຖານເພື່ອການຜະລິດເຂົ້ານັ້ນ ການສຶກສາໄດ້ມີຂໍ້ສັງເກດດັ່ງຕໍ່ໄປນີ້.

- ໃນເຂດທົ່ງຮາບ-ນາເຄືອ, ຄວາມສາມາດຫົດນ້ຳເຂົ້ານາຂອງສະຖານີສູບນ້ຳທີ່ມີຢູ່ປັດຈຸບັນເທົ່າກັບ 400 ເຮັກຕາທີ່ສາມາດຕອບສະຫນອງຕາມຄວາມຕ້ອງການຂອງເນື້ອທີ່ 260 ເຮັກຕາຂອງຊາວນາທີ່ມີຢູ່ປະຈຸບັນແຕ່, ເນື່ອງຈາກບໍລິມາດນ້ຳໃນລະດູແລ້ງທີ່ມີນ້ອຍໄດ້ຈຳກັດຂອບເຂດເນື້ອທີ່ຫົດສູງສຸດຈຶ່ງເປັນ 137 ເຮັກຕາ. ເພື່ອສາມາດຂະຫຍາຍເນື້ອທີ່ຊົນລະປະທານຂຶ້ນໃນໄລຍະການຜະລິດລະດູແລ້ງການສຶກສາໄດ້ສະເຫນີໃຫ້ສົ່ງເສີມການຜະລິດພືດລະດູແລ້ງທີ່ນຳໃຊ້ນ້ຳນ້ອຍເພື່ອປ່ຽນແທນເຂົ້ານາແຊງ.
- ໃນເຂດເນື້ອທີ່ວັງຄ້ອງ, ຊາວນາມີຄວາມມຸ້ງຫວັງຢາກຂະຫຍາຍເນື້ອທີ່ຊົນລະປະທານ 60ເຮັກຕາໂຄງການທີ່ໄດ້ກໍ່ສ້າງຂຶ້ນໃນປັດຈຸບັນສາມາດຫົດເນື້ອທີ່ໄດ້ພຽງແຕ່ 18 ເຮັກຕາ ຍ້ອນທີ່ຕັ້ງຂອງຈັກສູບນ້ຳບໍ່ເຫມາະສົມແລະຍ້ອນຂາດເນື້ອທີ່ນາ. ເພື່ອຢາກບັນລຸເປົ້າຫມາຍຂອງໂຄງການ ຈະຕ້ອງໄດ້ສຶກສາຊ່ອງທາງເພື່ອປັບປຸງລະບົບຊົນລະປະທານໂດຍສຶກສາເບິ່ງການເຄື່ອນຍ້າຍທີ່ຕັ້ງຂອງສະຖານີສູບນ້ຳ ຫລືວ່າ ນຳໃຊ້ຈັກສູບນ້ຳຂະຫນາດນ້ອຍເພື່ອສູບນ້ຳເສີມ.
- ໃນເຂດເນື້ອທີ່ໂພນທັນ, ເປົ້າຫມາຍຂອງຊາວນາແມ່ນຂະຫຍາຍເນື້ອທີ່ຊົນລະປະທານໃຫ້ໄດ້ 100 ເຮັກຕາ ໃນລະດູແລ້ງ, ແຕ່ວ່າຄວາມອາດສາມາດຫົດຂອງລະບົບຊົນລະປະທານມີພຽງແຕ່ 90 ເຮັກຕາຫລັງຈາກການປັບປຸງແລະເສີມສັນຜາຍຂຶ້ນຕື້ມແລ້ວ. ອີກດ້ານນຶ່ງ, ເຂດດັ່ງກ່າວຍັງໄດ້ນຳໃຊ້ນ້ຳຊົນລະປະທານໃນລະດູຝົນເພື່ອຕ້ານແລ້ງຈຳນວນຫລາຍຊົ່ງ

ຈະເຮັດໃຫ້ບໍລິມາດນ້ຳລົດລົງ ແລະບໍລິມາດຫົດເນື້ອທີ່ບໍ່ໄດ້ຕາມຄາດຫມາຍໃນລະດູແລ້ງ. ດັ່ງນັ້ນຈຶ່ງມີຄວາມຕ້ອງການ ໃຫ້ກຸ່ມນຳໃຊ້ນ້ຳບໍລິຫານ ແລະຈັດການນ້ຳໃນອ່າງເກັບນ້ຳ ໃຫ້ເປັນຢ່າງດີ.

4. ການນສ້າງຕັ້ງແຜນພັດທະນາ.

ພາຍໃຕ້ຫຼັກການພັດທະນາທີ່ອີງໃສ່ເສົາຄ້ຳ 3 ເສົາ, ບັນດາໂຄງການດັ່ງຕໍ່ໄປນີ້ ໄດ້ຖືກຄັດເລືອກ ແລະສ້າງຕັ້ງຂຶ້ນເປັນ ໂຄງການບຸລິມະສິດ.

4.1. ອົງການຈັດຕັ້ງຊາວກະສິກອນ

<u>ສ້າງຕັ້ງ ແລະເສີມສ້າງຄວາມເຂັ້ມແຂງຂອງກຸ່ມ/ອົງການຈັດຕັ້ງຊາວນາ</u>

(a) ເຂດທົ່ງຮາບ-ນາເຄືອ, (b) ເຂດວັງຄອງ ແລະ (c) ເຂດໂພນທັນ.

ເພື່ອສາມາດສົ່ງເສີມການສ້າງຕັ້ງ ແລະ ເສີມສ້າງກຸ່ມນຳໃຊ້ນ້ຳ ໃຫ້ເຂັ້ມແຂງ ແລະ ໃນຂັ້ນຕໍ່ໄປ ສ້າງຖານະ ໃຫ້ກຸ່ມນຳໃຊ້ນ້ຳ ກາຍເປັນສະມາຄົມນຳໃຊ້ນ້ຳ ໃນເຂດການຜະລິດເຂົ້າ ເປັນພື້ນຖານ ແລະ ມີກະເສດສຸມ ແລະ ກະເສດປະສົມປະສານ ຈຳນວນນຶ່ງ ຈະ ໄດ້ສ້າງຕັ້ງ ແລະ ເສີມສ້າງ ກຸ່ມ ຜະ ລິ ດ ກະ ສິ ກຳ ແລະ ກຸ່ມ ສິ ນ ເຊື້ອ ໃ ຫ້ ເ ຂັ້ ມ ແ ຂ ງ ໂ ດ ຍ ມີ ການ ພິ ຈ າ ລ ະ ນ າ ສະ ພ າ ບ ການ ຂ ອ ງ ແ ຕ່ ລ ະ ເ ຂ ດ ຈຸ ດ ສຸ ມ. ຫົ ວ ຫ ນ້ າ ກຸ່ ມ ຜ ະ ລິ ດ ຈ ະ ເ ປ ັ ນ ຊ າ ວ ນ າ ຕົ ວ ແ ບ ບ ແ ລ ະ ຈ ະ ເ ປ ັ ນ ຕົ ວ ຕັ້ ງ ຕົ ວ ຕີ ໃ ນ ການ ຮ ັ ບ ເ ອ ົ າ ການ ບ ໍ ລ ິ ການ ສິ ່ ງ ເ ສ ີ ມ ທ ີ ່ ສ ະ ຫ ນ ອ ງ ໂ ດ ຍ ພ ະ ແ ນ ກ ກ ະ ສ ິ ກ ຳ ປ ່ າ ໄ ມ້ ແ ຂ ວ ງ ແ ລ ະ ຫ້ ອ ງ ການ ກ ະ ສ ິ ປ ່ າ ໄ ມ້ ກ ຳ ເ ມ ືອ ງ. ນ ອ ກ ຈ າ ກ ນ ັ ້ ນ, ກ ຸ ່ ມ ຜ ູ້ ນ ຳ ໃ ຊ້ ນ ້ ຳ ຈ ະ ມ ີ ຫ ນ້ າ ທ ີ ່ ອ ັ ນ ສ ຳ ຄ ັ ນ ໃ ນ ການ ເ ກ ັ ບ ຄ ່ າ ບ ໍ ລ ິ ການ ນ ້ ຳ ຊ ົ ນ ລ ະ ປ ະ ທ ານ (ISF) ແ ລ ະ ຄ ຸ ້ ມ ຄ ອ ງ ນ ຳ ໃ ຊ້ ໂ ຄ ງ ການ ຊ ົ ນ ລ ະ ປ ະ ທ ານ ໃ ຫ້ ໄ ດ້ ດ ີ ໂ ດ ຍ ສ ະ ເ ພ າ ະ ດ ້ ານ ການ ຈ ັ ດ ການ ນ ້ ຳ ຊ 	n ລ ະ ປ ະ ທ ານ ແ ລ ະ ການ ເ ສ ີ ມ ສ ້ າ ງ ກ ອ ງ ທ ຶ ນ ພ ັ ດ ທ ະ ນ າ ບ ້ ານ ທ ີ ່ ເ ປ ັ ນ ປ ະ ເ ດ ັ ນ ຕ ົ ້ ນ ຕ ໍ ຂ ອ ງ ນ ະ ໂ ຍ ບ າ ຍ ມ ອ ບ ໂ ອ ນ ຊ ົ ນ ລ ະ ປ ະ ທ ານ ໃ ຫ້ ແ ກ່ ຊ ຸ ມ ຊ ົ ນ (IMT). ກ ິ ດ ຈ ະ ກ ຳ ດ ັ ່ ງ ກ່ າ ວ ຈ ະ ໄ ດ້ ຖ ືກ ປ ະ ຕ ິ ບ ັ ດ ຜ ່ ານ ບ ັ ນ ດ າ ກ ິ ດ ຈ ະ ກ ຳ ພ ັ ດ ທ ະ ນ າ ຂ ອ ງ ທ ີ ມ ງ ານ ສ ະ ເ ພ າ ະ ກ ິ ດ ໃ ນ ແ ຕ່ ລ ະ ເ ຂ ດ ເ ນ ື້ ອ ທ ີ່ ຕ ົ ວ ແ ບ ບ.

4.2. ການເງິນກະສິກຳ

<u>ເສີ ມ ສ້ າ ງ ຄ ວ າ ມ ເ ຂ ັ້ ມ ແ ຂ ງ ຂ ອ ງ ບ ັ ນ ດ າ ສ າ ຂ າ ແ ລ ະ ຫ ນ ່ ວ ຍ ບ ໍ ລ ິ ການ (SU/SSU) ຂ ອ ງ ທ ສ ກ (ການ ປ ະ ກ ອ ບ ລ ະ ດ ົ ມ ພ ະ ນ ັ ກ ງ ານ ໃ ຫ ມ່).</u>

(a) ຫ ນ ່ ວ ຍ ບ ໍ ລ ິ ການ ເ ມ ືອ ງ ປ າ ກ ຊ ັ ນ, (b) ຈ ຸ ບ ໍ ລ ິ ການ ເ ມ ືອ ງ ຫ ີ ນ ບ ູ ນ, (c) ສ າ ຂ າ ແ ຂ ວ ງ ສ ະ ຫ ວ ັ ນ ນ ະ ເ ຂ ດ

ລ ະ ດ ັ ບ ການ ເ ຂ ົ້ າ ຮ ່ ວ ມ ກ ິ ດ ຈ ະ ກ ານ ຂ ອ ງ ທ ີ ມ ງ ານ ສ ະ ເ ພ າ ະ ກ ິ ດ ຕ ົ ວ ແ ບ ບ ຂ ອ ງ ພ ະ ນ ັ ກ ງ ານ ທ ສ ກ ໃ ນ ໄ ລ ຍ ະ ການ ສ ຳ ຫ ຼ ວ ດ ພ າ ກ ສ ະ ຫ ນ າ ມ ໃ ນ ການ ສ ຶ ກ ສ າ ພ າ ກ ທ ີ ່ 2 ແ ມ່ ນ ບ ໍ່ ໄ ດ້ ຮ ັ ບ ຄ ວ າ ມ ເ ພ ິ ່ ງ ພ ໍ ໃ ຈ ຈ າ ກ ທ ີ ມ ງ ານ ສ ຶ ກ ສ າ ເ ພ າ ະ ວ ່ າ ເ ຂ ົ າ ເ ຈ ົ້ າ ແ ມ່ ນ ຄ າ ວ ງ ກ ປ ະ ຈ ຳ ວ ັ ນ ໃ ນ ຫ້ ອ ງ ການ ຂ ອ ງ ເ ຂ ົ າ ເ ຈ ົ້ າ ຫ ຼ າ ຍ. ໃ ນ ສ າ ຍ ຕ າ ໃ ຫ້ ທ ສ ກ ຮ ັ ບ ເ ອ ົ າ ພ ະ ນ ັ ກ ງ ານ ໃ ຫ ມ່ 50 ຄ ົ ນ ໃ ນ ແ ຕ່ ລ ະ ປ ີ, ທ ີ ມ ງ ານ ສ ຶ ກ ສ າ ໄ ດ້ ສ ະ ເ ຫ ນ ີ ໃ ຫ້ ທ ສ ກ ບ ັ ນ ຈ ຸ ພ ະ ນ ັ ກ ງ ານ ໃ ຫ ມ່ ນ ຶ ່ ງ ຄ ົ ນ ຕ ໍ່ ຫ້ ອ ງ ການ ບ ໍ ລ ິ ການ ສ ິ ນ ເ ຊ ື້ ອ ທ ີ ່ ກ ່ ຽ ວ ຂ້ ອ ງ ໃ ນ ເ ຂ ດ ເ ນ ື້ ອ ທ ີ ່ ຕ ົ ວ ແ ບ ບ ເ ພ ື່ ອ ລ ຸ ດ ຜ ່ ອ ນ ບ ໍ ລ ິ ມ າ ດ ວ ຽ ກ ງ ານ ຂ ອ ງ ພ ະ ນ ັ ກ ງ ານ ສ ິ ນ ເ ຊ ື້ ອ ທ ີ ່ ໄ ດ້ ບ ັ ນ ຈ ຸ ເ ຂ້ າ ໃ ນ ທ ີ ມ ງ ານ ສ ະ ເ ພ າ ະ ກ ິ ດ. ຄ ວ າ ມ ສ າ ມ າ ດ ໃ ນ ການ ບ ໍ ລ ິ ການ ຕ າ ມ ເ ນ ື້ ອ ທ ີ ່ ໆ ໄ ດ້ ມ ອ ບ ໝ າ ຍ ໃ ຫ້ ຫ ນ ່ ວ ຍ ງ ານ ບ ໍ ລ ິ ການ ສ ິ ນ ເ ຊ ື້ ອ ມ ີ ຈ ຳ ກ ັ ດ ແ ລ ະ ເ ປ ັ ນ ຄ ໍ ແ ກ້ ວ ໃ ນ ການ ຂ ະ ຫ ຍ າ ຍ ກ ິ ດ ຈ ະ ກ ານ ການ ເ ງ ິ ນ ໃ ນ ເ ຂ ດ ຊ ົ ນ ນ ະ ບ ົ ດ. ຊ ່ ອ ງ ທ າ ງ ອ ີ ກ ອ ັ ນ ນ ຶ ່ ງ ແ ມ່ ນ ສ ້ າ ງ ຕ ັ້ ງ ຫ ນ ່ ວ ຍ ບ ໍ ລ ິ ການ ສ ິ ນ ເ ຊ ື້ ອ ເ ຄ ື່ ອ ນ ທ ີ່ ໂ ດ ຍ ນ ຳ ໃ ຊ້ ພ າ ຫ ະ ນ ະ ເ ຄ ື່ ອ ນ ໄ ຫ ວ ໃ ນ ແ ຕ່ ລ ະ ແ ຂ ວ ງ ແ ລ ້ ວ ບ ໍ່ ຈ ຳ ເ ປ ັ ນ ຕ ັ້ ງ ຫ້ ອ ງ ການ ບ ໍ ລ ິ ການ ສ ິ ນ ເ ຊ ື້ ອ ໃ ຫ ມ່ ເ ປ ັ ນ ຢ່ າ ງ ໃ ດ ກ ໍ ຕ າ ມ, ມ ີ ຫ ຼ າ ຍ ບ ັ ນ ຫ າ ທ ີ ່ ສ ັ ບ ສ ົ ນ ເ ຊ ັ ່ ນ ຈ ະ ເ ຮ ັ ດ ແ ນ ວ ໃ ດ ຈ ຶ ່ ງ ສ າ ມ າ ດ ຮ ັ ບ ປ ະ ກ ັ ນ ເ ງ ິ ນ ເ ຊ ື້ ອ ໄ ດ້ ແ ມ່ ນ ຈ ະ ບ ໍ່ ສ າ ມ າ ດ ແ ກ້ ໄ ຂ ໄ ດ້ ພ າ ຍ ໃ ຕ້ ການ ສ ຶ ກ ສ າ ນ ີ້. ດ້ ວ ຍ ເ ຫ ດ ນ ີ້ ແ ນ ວ ຄ ິ ດ ນ ຳ ໃ ຊ້ ຫ ນ ່ ວ ຍ ບ ໍ ລ ິ ການ ສ ິ ນ ເ ຊ ື້ ອ ແ ນ ວ ເ ຄ ື່ ອ ນ ທ ີ ່ ຈ ະ ໄ ດ້ ຖ ືກ ນ ຳ ສ ະ ເ ຫ ນ ີ ໃ ຫ້ ພ ິ ຈ າ ລ ະ ນ າ ໂ ດ ຍ ລ ະ ອ ຽ ດ.

4.3. ຄວາມໝັ້ນຄົງຂອງການຜະລິດກະສິກຳແລະການເພີ້ມທະວີຜົນຜະລິດ

ເສີມສ້າງລະບົບຊຸກຍູ້ຊ່ວຍເຫຼືອຊາວນາໃຫ້ເຂັ້ມແຂງ (ກໍ່ສ້າງຂີດຄວາມສາມາດ ລວມທັງການພັດທະນາໂຄງສ້າງພື້ນຖານ)

(a) ເຂດທົ່ງຮາບ-ນາເຄືອ, (b) ເຂດວັງຄ້ອງ ແລະ (c) ເຂດໂພນທັນ.

ມັນເປັນສິ່ງທີ່ຈຳເປັນອັນຮີບດ່ວນທີ່ຈະຕ້ອງຍົກລະດັບດ້ານວິຊາການເຕັກນິກຂອງພະນັກງານວິຊາສະເພາະລົງເລິກ (SMS) ໃຫ້ກາຍເປັນກຸ່ມຊຸກຍູ້ດ້ານວິຊາການ ແລະ ຂອງພະນັກງານວິຊາການຂອງຫ້ອງການກະສິກຳປ່າໄມ້ເມືອງ ໃຫ້ກາຍເປັນພະນັກງານສົ່ງເສີມທົ່ວໄປ. ເພື່ອໃຫ້ສອດຄ່ອງກັບເປົ້າໝາຍດັ່ງກ່າວນີ້ ການກໍ່ສ້າງຂີດຄວາມສາມາດຂອງຜູ້ຮ່ວມໂຄງການ ຈະມີປະສິດທິຜົນ ແລະ ຖືກປະຕິບັດເປັນປະຈຳ ໂດຍການຝຶກອົບຮົມກັບທີ່ໃນຕະຫຼອດລະບົບຂອງແຜນງານໂຄງການ ທີ່ເລີ່ມຈາກການວາງແນວຄວາມຄິດ-ການສຶກສາເບື້ອງຕົ້ນ-ການວາງແຜນ/ອອກແບບ-ການປະຕິບັດການກໍ່ສ້າງໂຄງສ້າງພື້ນຖານທີ່ໄດ້ສະເໜີ. ໃນເບື້ອງຕົ້ນ ຈະມີຄວາມຕ້ອງການໃຫ້ມີການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ດ້ານທຶນຮອນຈາກພາຍນອກ, ເວລາທີ່ລະບົບຊຸກຍູ້ຊ່ວຍເຫຼືອໄດ້ຂະຫຍາຍຕົວຈົນກາຍເປັນເອກະລາດແລ້ວ ລະບົບນັ້ນຈະກາຍ ເປັນຕົວແບບໃຫ້ເຂດພື້ນທີ່ອື່ນໆ. ຄວາມຕ້ອງການຊ່ວຍເຫຼືອຈາກພາຍນອກມີດັ່ງລຸ່ມນີ້.

	ການປະກອບບຸກຄະລາກອນ (ຄົນ/ເດືອນ)			ການປະກອບທຶນ (US$)		
	ຕ່າງປະເທດ	ພາກພື້ນ	ພາຍໃນ	ຊ່ຽວຊານ	ອື່ນໆ	ລວມ
ທົ່ງຮາບ-ນາເຄືອ	9	26	13	368,500	50,000	418,500
ວັງຄ້ອງ	7	20	10	285,000	50,000	335,000
ໂພນທັນ	12	34	17	486,500	50,000	536,500

ໃນເຂດພື້ນທີ່ຕົວແບບສອງແຫ່ງ ນອກເໜືອຈາກເຂດໂພນທັນໄດ້ມີສະຖານີສູບນ້ຳ ທີ່ນຳໃຊ້ສາຍແມ່ນ້ຳລຳເຊ, ໃນເຂດດັ່ງກ່າວ ບັນຫາການຮັກສາອາຍຸການຂອງສະຖານີສູບນ້ຳໃຫ້ຍາວນານ (ໂດຍທົ່ວໄປໃຫ້ໄດ້ 15 ຫາ 20 ປີ ຖ້າຫາກມີການບົວລະບັດຮັກສາ ແລະສ້ອມແປງກົນຈັກເປັນປະຈຳ) ຈະເປັນບັນຫາທີ່ສຳຄັນ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນເສີມສ້າງໃຫ້ກຸ່ມນຳໃຊ້ນ້ຳໃນເຂດດັ່ງກ່າວນັ້ນເຂັ້ມແຂງ ພ້ອມກັນນັ້ນ ຈະໄດ້ສະໜອງຄວາມຮູ້ແລະການ ຝຶກອົບຮົມໃຫ້ຊາວນາຜູ້ໄດ້ຮັບຜົນປະໂຫຍດໃຫ້ພຽງພໍ ໂດຍສະເພາະໃນການແຈກຢາຍນ້ຳຊົນລະປະທານ ກໍຄືການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານ ໂດຍທົ່ວໄປ.

ການກໍ່ສ້າງໂຄງການ ຈະຖືກປະຕິບັດໄປພ້ອມໆກັນ ຕາມແຕ່ລະກິດຈະການ ທີ່ໄດ້ກຳນົດໄວ້, ເປັນຢ່າງໃດກໍຕາມ, ເຂດພື້ນທີ່ສຶກສານັ້ນກວ້າງຂວາງ, ດັ່ງນັ້ນ ຈຶ່ງໄດ້ສະເໜີເລີ່ມຕົ້ນການປະຕິບັດກິດຈະກຳຂອງໂຄງການ ຈາກເຂດ ໂພນທັນ ເປັນຕົ້ນໄປ ແລະ ໄປເຂດທົ່ງຮາບ-ນາເຄືອ ຈົນເຖິງເຂດວັງຄ້ອງ.

ກໍ່ສ້າງ/ປັບປຸງລະບົບຊົນລະປະທານຂະໜາດນ້ອຍ

(a) ເຂດທົ່ງຮາບ-ນາເຄືອ : ກໍ່ສ້າງຜາຍນ້ຳລົ້ນຢູ່ທົ່ງຮາບ ແລະ ບຸກເບີກເນື້ອທີ່ປູກຝັງໃໝ່ ລວມມູນຄ່າ 287,000 ໂດລາ

(b) ເຂດວັງຄ້ອງ : ຍົກຍ້າຍສະຖານທີ່ສະຖານີສູບນ້ຳ, ກໍ່ສ້າງອາຄານຄອງເໝືອງໃໝ່ ແລະ ບຸກເບີກເນື້ອໃໝ່ ລວມມູນຄ່າ 205,300 ໂດລາ

(c) ເຂດໂພນທັນ : ເສີມລະດັບສັນຜາຍ ແລະ ຂະຫຍາຍອາຄານຄອງເໝືອງ ລວມມູນຄ່າ 130,000 ໂດລາ.

ມີຄວາມຈຳເປັນທີ່ສຸດຕ້ອງເຮັດໃຫ້ອາຄານຄອງເໝືອງຊົນລະປະທານມີຄວາມຍືນຍົງເພື່ອໃຫ້ສາມາດພັດທະນາເຂດພື້ນທີ່ສຶກສາ ເນື່ອງຈາກວ່າຊາວນາໄດ້ອີງໃສ່ການຜະລິດເຂົ້າເປັນຕົ້ນຕໍ.ເພື່ອສາມາດໄປເຖິງຄວາມຍືນຍົງ,ການເສີມສ້າງລະບົບສິ່ງເສີມ ຊຸກຍູ້ຊ່ວຍເຫຼືອຊາວນາ ທີ່ຈະອະທິບາຍໃນຂັ້ນຕໍ່ໄປ ຈະຕ້ອງໄດ້ຖືກຮັບພິຈາລະນາ.

ກໍ່ສ້າງ/ປັບປຸງ ເສັ້ນທາງບ້ານ/ຊົນນະບົດ (ໄລຍະກາງແລະຍາວ)

(a) ເຂດທົ່ງຮາບ-ນາເຄືອ (119,000 ໂດລາ), (b) ເຂດວັງຄອງ (112,300 ໂດລາ) ແລະ (c) ເຂດໂພນທັນ (90,000 ໂດລາ)

ຕາໜ່າງເສັ້ນທາງທີ່ຕິດຕໍ່ແຕ່ລະເຂດພື້ນທີ່ຕົວແບບ ເຖິງສຳນັກເມືອງແລະແຂວງ ຈະມີໜ້າທີ່ສຳຄັນໃນການຂະຫຍາຍແລະ ຮັບປະກັນການຕະຫຼາດ ແລະ ການສະໜອງວັດຖຸປັດໄຈການຜະລິດກະສິກຳ ແລະ ການຈຳລະຈອນຜະລິດຕະພັນສິນຄ້າ ກະສິກຳ. ຢ່າງໃດກໍ່ຕາມ, ມັນມີຄວາມຫຍຸ້ງຍາກທີ່ຈະກຳນົດຜົນປະໂຫຍດຂອງ ບັນດາເສັ້ນທາງດັ່ງກ່າວ, ຈາກປະສົບ ປະການຂອງຊຸມຊົນ (ແລະ ຈາກແຫ່ງອື່ນ) ການສຶກສາໄດ້ສະເໜີໃຫ້ໂຄງການດັ່ງກ່າວ ການຍເປັນບຸລິມະສິດຂອງເມືອງ ແລະ ແຂວງທີ່ກ່ຽວຂ້ອງທີ່ມີງົບປະມານພຽງພໍ ສຳລັບຂະແໜງວຽກງານນີ້ແລ້ວ.

III - ການຈັດບຸລິມະສິດຂອງໂຄງການ ແລະ ຄຳແນະນຳ.

1. ການປະເມີນຜົນໂຄງການ ແລະ ການຈັດບຸລິມະສິດ.

1.1. ການຄັດເລືອກ/ອອກແບບໂຄງການ/ໂຄງການກໍ່ສ້າງ

ເພື່ອສາມາດປະຕິບັດບັນດາໂຄງການລວມ ແລະ ໂຄງການກໍ່ສ້າງທີ່ຖືກຄັດເລືອກ ແລະ ອອກແບບພາຍໃຕ້ແຜນແມ່ບົດ, ມີຄວາມຕ້ອງການໃຫ້ປະຕິບັດແນວຄວາມຄິດຂະຫຍາຍໄປສູ່ພື້ນທີ່ກວ້າງຂວາງແລະແນວຄວາມຄິດຍຸດທະສາດ/ເຂດພື້ນທີ່ຈຸດສຸມໄປພ້ອມໆກັນໃນທົ່ວປະເທດລາວ ຫຼື ໃນທົ່ວເຂດສຶກສາ ແລະ ເຂດພື້ນທີ່ຕົວແບບ. ໂຄງການລວມ ແລະ ໂຄງການກໍ່ສ້າງທີ່ໄດ້ຖືກກຳນົດໃນການສຶກສາ ໄດ້ຖືກນຳສະເໜີໂດຍອີງປະກອບພື້ນຖານດັ່ງຕໍ່ໄປນີ້. (ໃຫ້ເບິ່ງຕາຕະລາງ 1)

1.1.1. ແນວຄວາມຄິດສະເພາະເນື້ອທີ່ກວ້າງຂວາງ

(1) ອົງການຈັດຕັ້ງຊາວກະສິກອນ.

ບັນດາກິດຈະກຳເພື່ອສົ່ງເສີມການສ້າງຕັ້ງ ແລະ ເສີມສ້າງອົງການຈັດຕັ້ງຊາວນາໃຫ້ເຂັ້ມແຂງໃນເຂດພື້ນທີ່ຕົວແບບ ປະກອບດ້ວຍ (a) ການສ້າງຖານະດ້ວຍກົດໝາຍຂອງສະມາຄົມນຳໃຊ້ນ້ຳ ແລະ ຂອງກຸ່ມຜະລິດ, (b) ການເສີມຂະຫຍາຍ ການສຶກສາ ແລະ ການຝຶກອົບຮົມໃຫ້ແກ່ຊາວນາ (ຫົວໜ້າກຸ່ມ) ແລະ ກຸ່ມຊຸກຍູ້ຊ່ວຍເຫຼືອ (ພະນັກງານຂອງຫ້ອງການ ກະສິກຳ ປ່າໄມ້ ເມືອງ ແລະ (c) ການຈັດຕັ້ງແລະປະຕິບັດລະບົບການພັດທະນາຊຸມຊົນ ດ້ວຍນັກພັດທະນາຊຸມຊົນໃນລະດັບ ຫ້ອງການ ກະສິກຳປ່າໄມ້ເມືອງ.

(2) ການເງິນກະສິກຳ

ແຜນການປັບປຸງລະບົບການເງິນກະສິກຳ ປະກອບດ້ວຍ: (a) ການປັບປຸງລະບົບບັນຊີໃນຂະແໜງທະນະຄານ, (b) ການສ້າງຕະຫຼາດການເງິນໄລຍະສັ້ນ(c) ການປ່ອຍໃຫ້ອັດຕາດອກເບ້ຍຕາມເສລີ ແລະ ການເປີດສາຂາແລະ ໜ່ວຍບໍລິການແຫ່ງໃໝ່, ແລະ d) ການປັບປຸງວາງຄານຂອງສູນຝຶກອົບຮົມຂອງທະນະຄານແຫ່ງ ສປປ ລາວ. ນອກຈາກນັ້ນ, ແຜນການເສີມສ້າງໃຫ້ ທສກ ເຂັ້ມແຂງ ປະກອບດ້ວຍ: (a) ການປັບປຸງລະບົບບັນຊີ (b) ການຝຶກອົບຮົມພະນັກງານ ແລະ(c) ການປັບປຸງລະບົບຂໍ້ມູນຂ່າວສານ (MIS).

ການສ້າງລະບົບກະສິກຳໃຫ້ໝັ້ນຄົງ ແລະ ການເສີມເພີ້ມຜະລິດກະສິກຳ.

ເພື່ອເສີມສ້າງຄວາມເຂັ້ມແຂງຂອງລະບົບຊຸກຍູ້ຊ່ວຍເຫຼືອຊາວນາ ທີ່ສາມາດສະໜອງໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຢ່າງມີປະສິດທິຜົນ, ມີຄວາມຕ້ອງການໃຫ້ມີການປະສານສົມທົບ ລະຫວ່າງກິດຈະການທີ່ຄ້າຍຄືກັນ ພາຍໃນເຂດພື້ນທີ່ຕົວແບບ ເຊັ່ນ : (a) ການປະສານສົມທົບຂອງແຕ່ລະຂະແໜງການ ທີ່ເຮັດວຽກໃນລະບົບສົ່ງເສີມ, (b) ການສ້າງລະບົບຂໍ້ມູນຂ່າວສານ ພະນັກງານ, (c) ການໃຫ້ທິດທາງ ແລະ ຝຶກອົບຮົມດ້ານເຕັກນິກໃຫ້ແກ່ສະມາຊິກກຸ່ມພະນັກງານວິຊາການລົງເລິກ (ລະດັບແຂວງ) ແລະ ສະມາຊິກທີມງານສະເພາະກິດ ແລະ (d) ການຂຶ້ນບັນຊີໂຄງການຊົນລະປະທານ.

1.1.2. ແນວຄວາມຄິດເຂດພື້ນທີ່ພື້ນຖານ/ຈຸດສຸມ.

(1) ອົງການຈັດຕັ້ງຊາວກະສິກອນ

ແຜນການສ້າງຕັ້ງແລະເສີມສ້າງຄວາມເຂັ້ມແຂງຂອງກຸ່ມ/ອົງການຈັດຕັ້ງຊາວນາ ຈະເລີ່ມຈາກວຽກງານຈັດຕັ້ງທີ່ປະກອບມີການ ເສີມສ້າງການຈັດຕັ້ງກຸ່ມຜູ້ນຳໃຊ້ນ້ຳ ແລະ ກຸ່ມຜະລິດກະສິກຳໃນເຂດຕົວແບບ 3 ແຫ່ງ ໃຫ້ເຂັ້ມແຂງ, ຄື : ທົ່ງຮາບ-ນາເຄືອ, ວັງຄ້ອງ ແລະ ໂພນທັນ.

(2) ການເງິນກະສິກຳ

ແຜນການເສີມສ້າງການເງິນກະສິກຳໃຫ້ເຂັ້ມແຂງປະກອບດ້ວຍການເປີດສາຂາ ແລະ ໜ່ວຍບໍລິການສິນເຊື່ອໃໝ່ຂອງ ທສກ, ພ້ອມທັງການຮັບເອົາພະນັກງານໃໝ່ ເພື່ອປະກອບໃຫ້ແກ່ຫ້ອງການບໍລິການສິນເຊື່ອເມືອງປາກຊັນ, ໜ່ວຍບໍລິການສິນເຊື່ອເມືອງທີນບູນ ແລະ ສາຂາແຂວງສະຫວັນນະເຂດ.

(3) ການສ້າງລະບົບກະສິກຳໃຫ້ໝັ້ນຄົງ ແລະ ການເພີ່ມຜົນຜະລິດກະສິກຳ.

ປະຕິບັດຕາມແນວຄວາມຄິດຂະຫຍາຍໄປສູ່ເນື້ອທີ່ກວ້າງຂວາງໃນການເສີມສ້າງລະບົບຊຸກຍູ້ຊ່ວຍເຫຼືອຊາວນາໃຫ້ເຂັ້ມແຂງ ຈະໄດ້ດຳເນີນການພັດທະນາບຸກຄະລາກອນ (ເສີມສ້າງຄວາມສາມາດ) ຂອງຜູ້ຮ່ວມໂຄງການໄປພ້ອມກັບການພັດທະນາໂຄງສ້າງພື້ນຖານ ໃນເຂດພື້ນທີ່ຕົວແບບສາມແຫ່ງ. ການປັບປຸງແລະຟື້ນຟູລະບົບຊົນລະປະທານຂະໜາດນ້ອຍ ປະກອບດ້ວຍ (a) ການກໍ່ສ້າງຝາຍນ້ຳລົ້ນຢູ່ບ້ານທົ່ງຮາບ ແລະ ການບຸກເບີກເນື້ອທີ່ນາໃໝ່ໃນເຂດທົ່ງຮາບ-ນາເຄືອ, (b) ການຍົກຍ້າຍສະຖານີສູບນ້ຳໄປຢູ່ຈຸດໃໝ່, ການກໍ່ສ້າງອາຄານຄອງອເໝືອງໃໝ່ ແລະ ການບຸກເບີກເນື້ອທີ່ນາໃໝ່ໃນ ເຂດວັງຄ້ອງ, ແລະ (c) ການຍົກລະດັບສັນຝາຍ ແລະ ການຂະຫຍາຍຄອງເໝືອງໃນເຂດໂພນທັນ.

1.2. ການປະເມີນຜົນໂຄງການ.

ບັນດາໂຄງການລວມ ແລະ ໂຄງການກໍ່ສ້າງທີ່ໄດ້ຖືກຄັດເລືອກແລະອອກແບບກໍ່ສ້າງພາຍໃນເຂດເນື້ອທີ່ກວ້າງຂວາງ ຂອງການສຶກສາ ແລະ ເຂດພື້ນທີ່ພື້ນຖານ/ຈຸດສຸມໄດ້ຖືກປະເມີນຜົນລະອຽດ ໂດຍການນຳໃຊ້ວິທີການປະເມີນຜົນໂຄງການ ດັ່ງຕໍ່ໄປນີ້: (a) ສະພາບເສດຖະກິດ (EIRR); (b) ສະພາບການເງິນ (ຄວາມເປັນໄປໄດ້ໃນການລົງທຶນຂອງຊາວນາ ແລະ ໜ່ວຍງານຂອງລັດ); (c) ສະພາບສິ່ງແວດລ້ອມ (ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນຊົນນະບົດ); (d) ສະພາບການ ຈັດຕັ້ງບໍລິຫານ (ຄວາມຄອງແຄ້ວຂອງກຸ່ມ/ອົງການຈັດຕັ້ງຊາວນາທີ່ມີຢູ່ ແລະ ຄວາມຮັບຮູ້ຕໍ່ກັບແນວຄວາມຄິດ ການປະສານ ສົມທົບຫຼາຍຂະແໜງການ); (e) ສະພາບສັງຄົມ (ຂະຫຍາຍການລຸດຜ່ອນຄວາມທຸກຍາກ ແລະ ຂະຫຍາຍຄວາມເຂົ້າໃຈຕໍ່ແນວຄວາມຄິດການມີສ່ວນຮ່ວມ); ແລະ (f) ສະພາບການຈັດຕັ້ງ (ຄວາມຮັບຮູ້ພື້ນຖານຕໍ່ຫຼັກການພື້ນຖານໃນການພັດທະນາ ແລະ ເງື່ອນໄຂໃນການຂັນຂະຫຍາຍໄປສູ່ພື້ນທີ່ອື່ນໆ).

ຜົນຂອງການປະເມີນກິດຈະກຳໃນເຂດກວ້າງ ແລະ ເຂດ ພື້ນຖານ/ ຈຸດສຸມ ໄດ້ສະແດງໃນຕາຕະລາງດັ່ງລຸ່ມນີ້. ຕົວເລກລະດັບ ນ້ອຍກວ່າໜຶ່ງ (ສະເລັ່ງງ່າຍດາຍ) ສຳລັບອົງປະກອບການປະເມີນ ນີ້ຖືເປັນບຸລິມະສິດສູງສຸດ.

ຕາຕະລາງທີ່ - 1 ສະຫລຸບຫຍໍ້ ຂອງໂຄງການທີ່ໄດ້ນຳສະເໜີ ແລະ ບຸລິມະສິດ

3 ເສົາຫລັກສຳຫລັບການພັດທະນາ				ອົງການຊາວນາ	ການເງິນກະສິກຳ		ຄວາມໝັ້ນຄົງຂອງກະສິກຳ/ ການຜະລິດເພີ່ມຂຶ້ນ	
ສ່ວນປະກອບຂອງໂຄງການ (ບຸລິມະສິດ)				ການປັບປຸງກຸ່ມ/ ອົງການຊາວນາ (3)	ການພັດທະນາລະບົບການເງິນ (3)	ການພັດທະນາລະບົບ ການເງິນກະສິກຳ (2)	ການປັບປຸງລະບົບສິ່ງເສີມ ຊາວນາ (1)	ການພັດທະນາລະບົບ ຊົນລະປະທານ (2)
ກິດຈະກຳທາງກ້ວາງ				a. ກະກຽມໂຄງລ່າງທາງກົດໝາຍໃຫ້ຊາວນາ b. ອົບຮົມໃຫ້ຊາວນາ ແລະ ພະນັກງານສິ່ງເສີມ c. ຈັດຕັ້ງ ແລະລະດົມ ຜູ້ຄຸ້ມຄອງການພັດທະນາຊຸມຊົນ	d. ພັດທະນາລະບົບການບັນຊີທະນາຄານ e. ຈັດຕັ້ງຕະຫລາດການເງິນພື້ນຖານໄລຍະສັ້ນ f. ປ່ອຍເສລີອັດຕາດອກເບ້ຍ ແລະສາຂາທຸລະກິດ g. ປັບປຸງສູນອົບຮົມທະນາຄານກາງໃຫມ່	a. ພັດທະນາລະບົບການບັນຊີ b.ຈັດຕັ້ງໂຄງສ້າງໃຫມ່ c. ອົບຮົມພະນັກງານ d. ປັບປຸງລະບົບຄຸ້ມຄອງຂໍ້ມູນຂ່າວສານແລະການເຄື່ອນໄຫວ ວາງການ ໃຫ້ພະນັກງານສະໜາມ	a. ເຮັດໃຫ້ລະບົບສິ່ງເສີມຂະແໜງການເປັນອັນດຽວກັນ b. ກະກຽມພະນັກງານປອນຂໍ້ມູນ c. ເຮັດບົດແນະນຳແລະອົບຮົມ ພະນັກງານລົງເລີກວິຊາສະ ເພາະແລະສະມາຊິກທີມງານ ສະເພາະກິດ	a. ກະກຽມບັນຊີລະບົບ ˇຊົນລະປະທານ
		ສະພາບປັດຈຸບັນ	ທິດທາງການພັດທະນາ					
ດ້ານເງື່ອນໄຂ ແລະ ການ (ດ້ານ)	ເງື່ອນ - ການ	ເນື່ອງຈາກຄວາມຫຼົ້ມ ເຫລວຂອງການພັດທະນາຊົນ ລະປະທານ,ຊາວນາຈຶ່ງຂາດ ຄວາມເຊື່ອຖືຕໍ່ຕົວແທນຂອງ ລັດ ແລະການ ເງິນ ທສກ.	ໂດຍການປັບປຸງການບໍລິ ການດ້ານການເງິນ ແລະ ບຸກລາກອນຄຽງຄູ່ກັບການ ນັບປຸງການຈັດການນຳ້ ແບບລຸ່ມຫາເທິງຈຶ່ງຈະສ າມາດພິສູດໄດ້	ປັບປຸງກຸ່ມນຳໃຊ້ນຳ້ ແລະ ຍົກລະດັບເປັນ ສະມາຄົມນໄຊ ນຳ້ ເພື່ອການຈັດການນຳ້ທີ່ ເໝາະສົມລະຫວ່າງສາຂາ. ຈັດຕັ້ງກຸ່ມຜະລິດ ພືດໝູນວຽນ ແລະ ກະສິກຳປະສົມປະສານ		a..ການກະກຽມເພື່ອເງິນກູ້ທີ່ ໜັ້ນເຊື່ອຖື ສຳຫລັບການປັບ ປຸງ ແລະຟື້ນຟູລະບົບຊົນລະ ປະທານ b.ຮັບສະມັກພະນັກງານໃຫມ່ ສຳຫລັບຫນ່ວຍບໍລິການ ເມືອງປາກຊັນ □2□	a. ເສີມສ້າງຄວາມສາມາດຂອງ ພະນັກງານລົງເລີກວິຊາສະ ເພາະແລະສະມາຊິກທີມງານ ສະເພາະກິດດ້ວຍວິທີການ ແບບມີສ່ວນຮ່ວມ b. ເສີມສ້າງຄວາມສາມາດ ດວ້ຍການອົບຮົມກັບທີ່ □2□	a. ຟື້ນຟູຊົນລະປະທານທີ່ ເສຍຫານຢ່າງຮີບດ່ວນ b. ກໍ່ສ້າງຝາຍທີ່ບ້ານທີ່ງ ຮາບ □2□
	ວິທີການ	ເນື່ອງຈາກໄດ້ຮັບຄວາມ ເສຍຫາຍຈາກໄພນຳ້ຖ້ວມ ເປັນປະຈຳ, ການເຄື່ອນໄຫວຂອງຊາວນາ ຈຶ່ງຮັກສາໄວ້ຊຶ່ງຄວາມໝັ້ນຄົງ ຂອງການກະສິກຳ ເພື່ອກູ້ມຕົນເອງ	ການກະສະກຳທີ່ນຳໃຊ້ຊົນ ລະປະທານຈະໄດ້ຖືກ ແນະນຳ ພານໃຕ້ລະບົບ ສິ່ງເສີມທີ່ມີຄວາມສາ ມາດ	ການຈັດຕັ້ງ ກຸ່ມຜູ້ນຳໃຊ້ນຳ້ ການຈັດຕັ້ງກຸ່ມຜະລິດເພື່ອຜະ ລິດເຂົ້າ □3□		a..ການກະກຽມເພື່ອເງິນກູ້ທີ່ ໜັ້ນເຊື່ອຖື ສຳຫລັບການປັບ ປຸງ ແລະຟື້ນຟູລະບົບຊົນລະ ປະທານ b.ຮັບສະມັກພະນັກງານໃຫມ່ ສຳຫລັບສາຂາບໍລິການຍ່ອຍ ເມືອງທົ່ນບູນ □3□	a. ເສີມສ້າງຄວາມສາມາດໃຫ້ ພະນັກງານລົງເລີກວິຊາສະ ເພາະແລະພະນັກງານກະສິກ ຳຊົນລະປະທານເມືອງ b. ເສີມສ້າງຄວາມສາມາດ ດ້ວຍການອົບຮົມກັບທີ່ □3□	a. ກວດການວາງແຜນຊົນລະ ປະທານໃນປະຈຸບັນ b. ມອບໂອນນຳ້ທີ່ມີຢູ່, ກໍ່ສ້າງຄອງ ເໝືອງ ແລະ ບຸກເບີກເນື້ອທີ່ □1□

	ໂພນທັນ	ການຜະລັດເຂົ້າເພື່ອກຸ້ມຕົນເອງ. ເນື່ອງຈາກບໍ່ມີການສ່ຽງຕໍ່ໄພນ້ຳຖ້ວມຈື່ງຄາດວ່າຈະສົ່ງເສີມການກະສິກຳກ້າວໜ້າໂດຍການນຳໃຊ້ພືດ ໝູນວຽນ ແລະກະສິກຳແບບປະສົມປະສານ	ໂດຍຜ່ານການສະໜອງວັສດຸທີ່ພຽງພໍ່ແລະອົງການຊາວນາທີ່ມີປະສິດທິພາບແລະການຕະຫລາດກໍ່ຈະມີການສົ່ງເສີມ	ການພັດທະນາກະສິກຳກ້າວໜ້າໂດຍການຈັດຕັ້ງກຸ່ມນຳໃຊ້ນ້ຳ, ກຸ່ມຜະລິດກະສິກຳ/ກຸ່ມຊື້-ຂາຍກະກຽມລະບົບເພື່ອຮັບເອົາການສົ່ງເສີມຈາກພາກລັດແລະການບໍລິການດ້ານການເງິນ □2□	-	a..ການກະກຽມເພື່ອເງັນກູ້ທັໜ້າເຊື່ອຖື ສຳຫລັບການກະສິກຳທີ່ກ້າວໜ້າ b.ຮັບສະມັກພະນັກງານໃຫມ່ສຳຫລັບສາຂາແຂວງສະຫວັນນະເຂດ □3□	a. ເສັມສັາງຄວາມສາມາດສະມາດທີມງານສະເພາະກິດລວມທັງທສກ ແລະ ບໍລິສັດສະບຽງອາຫານ. b. ເສີມສັາງຄວາມສາມາດ ໂດຍຜ່ານ OJT □1□	a. ສັາງເຂື້ອນທັເໝາະສັມເພື່ອການກະສິ ກຳທີ່ກ້າວໜ້າ b. ເສີມຄັນຄູອ່າງ ແລະ ຂະຫຍາຍຄອງ ເໝືອງ. □3□

ການປະເມີນຜົນທົ່ວໄປຂອງບັນດາໂຄງການບຸລິມະສິດ(ສັງລວມ)

ອົງປະກອບຕົ້ນຕໍ	ອົງປະກອບສຳຮອງ	ການປະເມີນຜົນທົ່ວໄປ		
ແນວຄວາມຄິດສະເພາະເນື້ອທີກວ້າງຂວາງ		ສະເພາະປະເທດລາວແລະຕົວແບບ 3 ແຫ່ງ		
ອົງການຈັດຕັ້ງຊາວນາ	ສ້າງຕັ້ງກຸ່ມ/ການບໍລິຫານ	2.00		
ການເງິນກະສິກຳ	ປັບປຸງລະບົບການເງິນ	2.13		
	ເສີມສ້າງຄວາມເຂັ້ມແຂງຂອງ ທສກ	1.88		
ສ້າງລະບົບການຜະລິດກະສິກຳ	ເສີມສ້າງລະບົບສິ່ງເສີມຊຸກຍູ້ຊ່ວຍເຫລືອ	1.89		
ແນວຄວາມຄິດ ເຂດ ພື້ນຖານ/ຈຸດສຸມ		ເຂດພື້ນທີ່ຕົວແບບ		
		ທົ່ງຮາບ ນາເຄື່ອ	ວັງຄ້ອງ	ໂພນທັນ
ອົງການຈັດຕັ້ງຊາວນາ	ສ້າງຕັ້ງແລະເສີມສ້າງກຸ່ມ	1.75	2.00	1.63
ການເງິນກະສິກຳ	ເສີມສ້າງໜ່ວຍບໍລິການ	1.89	2.00	1.56
ສ້າງລະບົບການຜະລິດກະສິກຳ	ເສີມສ້າງລະບົບສິ່ງເສີມຊຸກຍູ້ຊ່ວຍເຫລືອ	2.00	2.10	1.50
ເພີ້ມຜົນຜະລິດ	ປັບປຸງພື້ນຟູລະບົບຊົນລະປະທານ	1.91	2.00	1.64
	ກໍ່ສ້າງເສັ້ນທາງບ້ານ/ຊົນນະບົດ	1.71	1.71	1.43

1.3. ການວາງບຸລິມະສິດ.

ໂດຍກ່ຽວພັນກັບເປົ້າໝາຍໄລຍະສັ້ນ ທີ່ກ່າວມາຂ້າງເທິງ, ບຸລິມະສິດຂອງແຕ່ລະເຂດພື້ນທີ່ໄດ້ຖືກຄັດເລືອກ ອີງຕາມສະພາບທີ່ມີຢູ່ປັດຈຸບັນ ແລະ ກິດຈະກຳທີ່ໄດ້ຄາດຄະເນໄວ້ໃນອານາຄົດ (ໃຫ້ເບິ່ງຮູບພາບ 6). ລະດັບຄາດໝາຍສຳລັບການພັດທະນາໂຄງການບຸລິມະສິດ ໄດ້ຖືກກຳນົດໂດຍ :

(a) ການກຸ້ມຕົນເອງດ້ານເຂົ້າ : ມີຄວາມໝາຍເພື່ອຜະລິດບໍລິມາດໃຫ້ພຽງພໍກັບການບໍລິໂພກໃນຄົວເຮືອນ ໄປເຖິງການຜະລິດເຂົ້າໃຫ້ເຫຼືອກິນເພື່ອຂາຍ ແລະ ເຮັດໃຫ້ເຂດພື້ນທີ່ເປັນອູ່ເຂົ້າໃນປະເທດ.

(b) ລະດັບເຕັກນິກວິຊາການຂອງຊາວນາ :
ຊາວນາໂດຍທົ່ວໄປຍັງບໍ່ທັນເຂົ້າໃຈວິທີການປູກເຂົ້າແບບໃໝ່ທີ່ໄດ້ນຳສະເໜີ, ແຕ່ເຂົາເຈົ້າຍັງໄດ້ປູກເຂົ້າແບບວິທີໃໝ່ ເພື່ອເພີ້ມລາຍຮັບຂອງເຂົາເຈົ້າ, ນອກນັ້ນ ຍັງມີການປູກພືດ ແລະປະຕິບັດການກະເສດແບບປະສົມປະສານຢ່າງກວ້າງຂວາງ.

(c) ການກໍ່ສ້າງໂຄງສ້າງພື້ນຖານ : ລະບົບແລະອາຄານ (ໃໝ່ ຫຼື ທີ່ໄດ້ຮັບການປັບປຸງ) ໄດ້ຖືກວາງແຜນໂດຍລະອຽດ, ກວດກາແລະຊີ້ນຳໆພາໂດຍວິຊາວະກອນທີ່ນຳໃຊ້ເຕັກໂນໂລຢີເໝາະສົມ.

Figure-6 ສະພາບບົດຈຸບັນ ແລະເປົ້າໝາຍການພັດທະນາບຸລິມະສິດ ຂອງເຂດຕົວແບບ



ສະພາບປັດຈຸບັນຂອງແຕ່ລະເຂດຕົວແບບ

ເຂດຕົວແບບ	ມີເຮັດກັນ ກຸ່ມຕົນເອງ	ລະດັບ ເຕັກນິກ	ໂຄງລ່າງພື້ນຖານ	ການຂະຫຍາຍ ກະສິກຳ	ອົງການ ຊາວນາ	ການເງິນ ການຕະຫລາດ
ທ່າຈະຈາ-ນາເຄີດ	ບໍ່ ສຳເລັດ	ຕ່ຳ	ບໍ່ ເຈີດວຽກ	ອອນແອ	ເກີ ຈານ ທ່ານ	ເກີ ຈານ ທ່ານ
ວັດຕະຄັດ	ຕ່ຳ ທີ່ສຸດ	ຕ່ຳ ທີ່ສຸດ	ກຳລັງ ດຳເນີນການ	ອອນແອ	ບໍ	ບໍ
ໂພນທັນ	ເຫລື້ອກັນ	ກຸ່ມກັນ	ບັກຸ່ມກັນ	ບານກາງ ເຂົ້າໃຈ ທີ່ມຈນຂະເພາະດີ	ມີ	ມີ



ການພັດທະນາບຸລິມະສິດຂອງເຂດຕົວແບບແຕ່ລະເຂດ

ເຂດຕົວແບບ	ມີເຮັດກັນ ກຸ່ມຕົນເອງ	ລະດັບ ເຕັກນິກ	ໂຄງລ່າງພື້ນຖານ	ການຂະຫຍາຍ ກະສິກຳ	ອົງການ ຊາວນາ	ການເງິນ ການຕະຫລາດ
ທ່າຈະຈາ-ນາເຄີດ	ເຫລື້ອກັນ	ຍົກລະດັບ ຫ້ວໂບ	ສົ່ງເສີ ແລະ ປັບປຸງ	ການປັບປຸງ ສ/ງລ້ຽງເລັກ	ຈັດຕັ້ງ ອົງການ ຊຸມນຳໂຮນາ	ສົ່ງ ສົ່ງເສີ ປັບປຸງ
ວັດຕະຄັດ	ໄດ້ຮັບການ ກຸ່ມ ຕົນເອງ	ຍົກລະດັບ ຫ້ວໂບ	ຄວບຄຸ ປັບຂວນ ກໍ່ສ້າງ	ປັບປຸງ ສ/ການກະສິກຳນ້ອງ	ການສ້າງ ແບບມີສ່ວນຮ່ວມ ອົງການ	ການເງິນ ສຳຫລັບ ການສ້າງ
ໂພນທັນ	ເຫລື້ອກັນ	ຈັດລະດັບສັ້ນ	ປະຕິບັດ ແລະ ປົກປັກຮັກສາ ໂດຍ WUG	ປັບປຸງ ກິດຈະກຳ ທີ່ມຈນຂະເພາະດີ	ປັບປຸງ ອົງການ ຊາວນາ	ປັບປຸງ ເງື່ອນ ລະດູການ

ໂຄງການບຸລິມະສິດສູງ

ໂຄງການບຸລິມະສິດ

ການສົ່ງເສີມກະສິກຳ : ຈັດຕັ້ງປະຕິບັດການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້ ແລະ ຄວາມສາມາດດ້ານເຕັກນິກຂອງພະນັກງານວິຊາສະເພາະລົງເລິກ (SMS) ແລະ ການສະໜອງການຊ່ວຍເຫຼືອດ້ານເຕັກນິກໃຫ້ທີມງານສະເພາະກິດ ໂດຍປະຕິບັດຕາມແນວຄິດການມີສ່ວນຮ່ວມ, ເຮັດໃຫ້ເຂົາເຈົ້າເປັນຕົວຕັ້ງ ຕົວຕີໃນໜ້າທີ່ ການສົ່ງເສີມ.

(d) ອົງການຈັດຕັ້ງຊາວກະສິກອນ : ມີກຸ່ມນຳໃຊ້ນ້ຳ ແລະ ອົງການຈັດຕັ້ງຊາວນາອື່ນໆ, ໜ້າທີ່ແລະຄວາມຮັບຜິດຊອບຂອງສະມາຊິກມີຄວາມແຈ່ມແຈ້ງ ແລະ ມີການຮັບຮູ້ເຖິງການມີສ່ວນຮ່ວມໃນການຈັດການນຳຊົນລະປະທານ, ການເງິນກະສິກຳ ແລະ ການຈຳໜ່າຍຜະລິດຕະພັນດ້ວຍຕົນເອງ ຖ້າຫາກບໍ່ມີການຊ່ວຍເຫຼືອ ຈາກໜ່ວຍງານສົ່ງເສີມ; ແລະ

(e) ການເງິນກະສິກຳ/ການຕະຫຼາດ : ມີຄວາມເປັນໄປໄດ້ໃຫ້ຊາວນາຮັບເອົາສິນເຊື່ອ ແລະ ວັດຖຸປັດໄຈການຜະລິດຕາມຈຳນວນແລະເວລາທີ່ຕ້ອງການ; ແລະມີລະບົບການຕະຫຼາດຜະລິດຕະພັນກະສິກຳ ທີ່ຖືກນຳໃຊ້, ແລະໃນຂັ້ນຕໍ່ໄປ ກິດຈະການດັ່ງກ່າວ ແມ່ນອົງການຈັດຕັ້ງຊາວນາເອງ ເປັນຜູ້ຈັດຕັ້ງປະຕິບັດດ້ວຍຕົນເອງໂດຍບໍ່ມີບັນຫາ.

ບັນດາເປົ້າໝາຍທີ່ເປັນບຸລິມະສິດ ຈະຕ້ອງໄດ້ກະທົບເຖິງບັນດາບັນຫາ ແລະ ຂໍ້ຈຳກັດທີ່ເປັນພື້ນຖານໃນໝູ່ບ້ານ ພ້ອມກັນນັ້ນອົງປະກອບຂອງໂຄງການຈະຕ້ອງໄດ້ຖືກວາງແຜນຢ່າງລະມັດລະວັງ ໂດຍການວິເຄາະທຸກສະພາບການ ຊັດເຈນທີ່ມີຢູ່ໃນແຕ່ລະເຂດ. ແຕ່ລະເຂດເນື້ອທີ່ຕົວແບບທີ່ໄດ້ຖືກຄັດເລືອກເປັນເຂດພື້ນຖານ/ຈຸດສຸມ ຈະມີຮູບການພັດທະນາສະເພາະຂອງຕົນເອງ ແລະ ການຂະຫຍາຍຕົວພ້ອມທັງບຸລິມະສິດຂອງເຂດດັ່ງກ່າວ ຈະຂຶ້ນກັບສະພາບການໃນປັດຈຸບັນ ແລະ ຄາດໝາຍທີ່ໄດ້ວາງໄວ້ໃນອານາຄົດດັ່ງລຸ່ມນີ້.

ປະເມີນສະພາບໃນເຂດຕົວແບບ(ຈັດອັນດັບ)

ເຂດ	ຮູບແບບການພັດທະນາ	ອົງການຈັດຕັ້ງຊາວນາ			ການເງິນກະສິກຳ	ເສີມສ້າງລະບົບກະສິກຳ			ປະເມີນລວມ
		WUG	APG	ປະເມີນ		ອ່ອນ	ແຂງ	ປະເມີນ	
ທີ່ງຮາບນາເຄືອ	ຄຸ້ມຄອງແຫລ່ງນ້ຳຕາມອ່າງ&ປັບປຸງການເງິນກະສິກຳ	1	2	1	2	2	2	2	2
ວັງຄອງ	ກະເສດຊົນລະປະທານແບບປະສົມປະສານ&ຫລຸດຜ່ອນຄວາມທຸກຍາກ	3	3	3	3	3	1	3	3
ໂພນທັນ	ການກະເສດແບບທັນສະໄໝ&ການຄຸ້ມຄອງຮັກສາອ່າງເກັບນ້ຳ	2	1	2	1	1	3	1	1

(ໝາຍເຫດ) ບຸລິມະສິດ1= ສູງ 2= ກາງ 3= ຕ່ຳ

2. ຄຳແນະນຳ

2.1. ການຈັດຕັ້ງປະຕິບັດການພັດທະນາບຸກຄະລາກອນເປັນບຸລິມະສິດ

ວິທີການທີ່ມີເຫດຜົນແລະສາມາດບັນລຸຜົນເປັນຈິງ ເພື່ອເສີມສ້າງຄວາມສາມາດຂອງບຸກຄະລາກອນລະດັບສູນກາງ, ມັນມີຄວາມຈຳເປັນ (ໃນກິດຈະການເຂດກວ້າງຂວາງ) : (a) ຈະຕ້ອງໄດ້ເຮັດໃຫ້ລະບົບສົ່ງເສີມປັດຈຸບັນ ເປັນອັນນຶ່ງອັນດຽວກັນ, (b) ຈະຕ້ອງສ້າງຖານຂໍ້ມູນພື້ນຖານໃຫ້ພະນັກງານທີ່ກ່ຽວຂ້ອງ, (c) ຈະຕ້ອງສະໜອງການສຶກສາແລະຝຶກອົບຮົມໃຫ້ແກ່ພະນັກງານວິຊາສະເພາະຂອງພະແນກກະສິກຳປ່າໄມ້ແຂວງແລະ ໃຫ້ແກ່ພະນັກງານ ສົ່ງເສີມລວມຂອງຫ້ອງການກະສິກຳປ່າໄມ້ເມືອງ, ແລະ (d) ຈະຕ້ອງກາງມການຂຶ້ນບັນຊີລະບົບຊົນລະປະທານທີ່ມີຢູ່. ໃນດ້ານນຶ່ງ

ພາຍໃນເຂດຈຸດສຸມ ກິດຈະກຳນຈະປະກອບດ້ວຍ (a) ການສ້າງຕັ້ງແລະເສີມສ້າງລະບົບການຈັດການ ນຳດ້ວຍຊາວນາ (ກຸ່ມຜູ້ນຳໃຊ້ນຳ້/ສະມາຄົມຜູ້ນຳໄຊ້ນຳ້) ໃຫ້ເຂັ້ມແຂງ, (b) ການສ້າງຕັ້ງແລະເສີມສ້າງຄວາມເຂັ້ມແຂງ ຂອງກຸ່ມຜະລິດກະສິກຳ (ກຸ່ມສິນເຊື່ອ/ກຸ່ມຜະລິດກະສິກຳ) ແລະ ການສະໜອງການຝຶກອົບຮົມກັບທີ່ ແລະ ການຈັດຕັ້ງ ປະຕິບັດການຟື້ນຟູ ແລະ ກໍ່ສ້າງລະບົບຊົນລະປະທານໂດຍນຳໃຊ້ກິດຈະກຳນກໍ່ສ້າງ ແລະ ຕິດຕັ້ງເປັນເຄື່ອງມື ການຝຶກອົບຮົມ.

ການສຶກສາໃຫ້ຄຳແນະນຳຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມໂຄງການດັ່ງລຸ່ມນີ້.

<u>ຊາວນາຜູ້ໄດ້ຮັບຜົນປະໂຫຍດ.</u>

- ສ້າງຕັ້ງອົງການຈັດຕັ້ງ/ກຸ່ມ (ກຸ່ມສິນເຊື່ອ, ກຸ່ມຜະລິດກະສິກຳ, ກຸ່ມຊື້ຂາຍ, ກຸ່ມນຳໃຊ້ນຳ້/ສາມະຄົມນຳໃຊ້ນຳ້) ແລະ ສ້າງ ໃຫ້ກຸ່ມດັ່ງກ່າວເປັນລະບົບ.
- ສະໜອງຊັບພະຍາກອນທ້ອງຖິ່ນ ເພື່ອການກໍ່ສ້າງອາຄານຕ່າງໆ ລວມທັງແຮງງານ ແລະ ວັດຖຸກໍ່ສ້າງ.
- ຮັບພາລະການໃຊ້ຈ່າຍໃນກິດຈະກຳສິ່ງເສີມຈຳນວນນຶ່ງ.
- ພົວພັນແລະປະສານສົມທົບກັບໜ່ວຍງານສິ່ງເສີມຂອງລັດ ແລະ ຕອບສະໜອງຕາມຄວາມຕ້ອງການຂອງເຂົາເຈົ້າ.

<u>ຫ້ອງການກະສິກຳປ່າໄມ້ເມືອງ.</u>

- ຮັບການຝຶກອົບຮົມຈາກພະນັກງານວິຊາສະເພາະລົງເລິກ (SMS) ແລະ ຍົກລະດັບຄວາມຮູ້ຄວາມສາມາດດ້ວຍຕົນເອງ ໂດຍຜ່ານວຽກງານຕົວຈິງ.
- ເຂົ້າຮ່ວມແລະປະສານງານໃນວຽກງານຂອງທີມງານສະເພາະກິດ.

<u>ພະແນກກະສິກຳປ່າໄມ້ແຂວງ.</u>

- ກະກຽມຖານຂໍ້ມູນພື້ນຖານໃຫ້ແກ່ລະບົບຊຸກຍູ້ຊ່ວຍເຫຼືອຊາວນາ.
- ເສີມສ້າງຄວາມຮູ້ຄວາມສາມາດຂອງພະນັກງານວິຊາສະເພາະລົງເລິກ (SMS).
- ຊຸກຍູ້ຊ່ວຍເຫຼືອດ້ານເຕັກນິກໃຫ້ແກ່ກິດຈະກຳນຂອງທີມງານສະເພາະກິດ.
- ກະກຽມຂຶ້ນບັນຊີຊັບສົມບັດຊົນລະປະທານທີ່ມີຢູ່.

<u>ພະນັກງານຫ້ອງການສູນກາງ.</u>

- ອຳນວຍຄວາມສະດວກໃນການແກ້ໄຂບັນຫາດ້ານການເມືອງ.
- ສ້າງລະບົບການສິ່ງເສີມໃຫ້ເປັນອັນນຶ່ງອັນດຽວກັນ.
- ກະກຽມແລະຄຸ້ມຄອງຂໍ້ມູນຂ່າວສານໃຫ້ແກ່ພະນັກງານທີ່ກ່ຽວພັນກັບລະບົບຊຸກຍູ້ຊ່ວຍເຫຼືອຊາວນາ.

<u>ທສນ.</u>

- ປະກອບພະນັກງານຂອງຕົນເອງ ແລະ ປະສານສົມທົບກັບກິດຈະກຳນຂອງທີມງານສະເພາະກິດ.

2.2. - ເສີມສ້າງຄວາມສາມາດຂອງ ທສກ ໃນການຮັບເອົາສິນເຊື່ອຕ່າງປະເທດສອງຈ້ຽງຫວະ.

ເນື່ອງຈາກເຂດພື້ນທີ່ສຶກສາຕັ້ງຢູ່ໃນສະຖານທີ່ອຸດົມສົມບູນຕາມລຳແມ່ນ້ຳຂອງ, ມັນມີເງື່ອນໄຂທີ່ຈະນຳໃຊ້ແນວຄວາມຄິດການພັດທະນາ ທີ່ສາມາດລະດົມການເງິນກະສິກຳ ໄດ້ງ່າຍດາຍກວ່າເຂດອື່ນໆໃນປະເທດລາວ.ທສກ ຈະມີບົດບາດສຳຄັນສຳລັບການເງິນກະສິກຳຄືດັ່ງເມື່ອກ່ອນ, ທີ່ສາມາດເປັນຜູ້ຂະຫຍາຍທຸລະກິດການເງິນໃນເຂດຊົນນະບົດ, ແຕ່ໃນຂັ້ນຕໍ່ໄປ ມັນມີຄວາມລຳບາກທີ່ທະນາຄານແຫ່ງ ສປປ ລາວ ຈະສືບຕໍ່ສະໜອງການທຶນສິນເຊື່ອ ເພື່ອໂຄງການສິນເຊື່ອຂອງ ທສກ ຍ້ອນສະພາບຖານະດ້ານການເງິນຂອງລັດຖະບານມີຈຳກັດ. ດັ່ງນັ້ນ ຈຶ່ງມີຄວາມຕ້ອງການຮີບດ່ວນ ທີ່ຈະຈັດຕັ້ງ ແລະ ເສີມສ້າງຂີດຄວາມສາມາດຂອງ ທສກ ຄືນໃໝ່ ເພື່ອຮັບເອົາເງິນກູ້ຈາກຕ່າງປະເທດ (ເງິນກູ້ສອງຈ້ຽງຫວະ). ໃນຖານະການປັບປຸງລະບົບການເງິນຂອງປະເທດລາວໂດຍລວມ, ການສຶກສາໄດ້ມີຄຳແນະນຳດັ່ງລຸ່ມນີ້.

<u>ທະນາຄານແຫ່ງ ສປປ ລາວ</u>.

- ສ້າງແລະສົ່ງເສີມຕະຫຼາດການເງິນພາຍໃນສຳລັບໄລຍະສັ້ນ.
- ປັບປຸງລະບົບການບັນຊີທະນະຄານຢ່າງຕັ້ງໜ້າ.
- ສືບຕໍ່ການຊ່ວຍເຫຼືອດ້ານການເງິນໃຫ້ແກ່ ທສກ ໂດຍການພາຍໃຕ້ໂຄງການສິນເຊື່ອທີ່ມີຢູ່ປັດຈຸບັນ ຈົນກວ່າທະນະຄານມີຄວາມສາມາດຮັບເງິນກູ້ສອງຈ້ຽງຫວະຈາກຕ່າງປະເທດ.

<u>ທສກ</u>.

- ປະກອບສິນເຊື່ອໄລຍະຍາວ : ໃນເຂດເນື້ອທີ່ຕົວແບບ, ທສກ ຈະຕ້ອງໄດ້ສືບຕໍ່ສະໜອງສິນເຊື່ອຕາມລະດູການ ສຳລັບການໃຊ້ຈ່າຍການຜະລິດກະສິກຳໃນແຕ່ລະລະດູການ
  ໂດຍສະເພາະພາຍຫຼັງສຳເລັດການກໍ່ສ້າງໂຄງການຊົນລະປະທານ.
- ຈັດຕັ້ງປະຕິບັດການກວດສອບບັນຊີຈາກພາຍນອກ ແລະ ຈັດພິມຕົນການກວດສອບໃຫ້ມະຫາຊົນຊາບ.
- ສົ່ງເສີມການເກັບທຶນບົ່ມຊ້ອນ ຈາກຊົນນະບົດຄືນ ໂດຍການຂະຫຍາຍເງິນຝາກປະຫຍັດ.
- ຈັດການຝຶກອົບຮົມໄປປະເທດທີ່ສາມໃຫ້ພະນັກງານຫຼັກແຫຼ່ງ.

<u>ຊາວນາຜູ້ໄດ້ຮັບຜົນປະໂຫຍດ</u>.

- ປະສົມສົມທົບກັບ ທສກ ໃນການເຮັດໃຫ້ວິທີການສະເໜີຂໍສິນເຊື່ອກະທັດລັດເບົາບາງລົງ ໂດຍການຈັດຕັ້ງກຸ່ມສິນເຊື່ອ ແລະ ກຸ່ມຜະລິດກະສິກຳ.

2.3. ຈັດຕັ້ງປະຕິບັດໂຄງການພັດທະນາເຂດໂພນທັນເປັນບຸລິມະສິດ.

ໄດ້ໃຫ້ຂໍ້ສັງເກດວ່າ ການຕອບສະໜອງແລະຄວາມເຂົ້າໃຈຂອງທີມງານສະເພາະກິດຂອງແຂວງສະຫວັນນະເຂດນັ້ນ ແມ່ນສູງກວ່າຖ້າທຽບໃສ່ສອງແຂວງອື່ນ. ໃນການຈັດຕັ້ງທີມງານສະເພາະກິດ, ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ໄດ້ສະເໜີໃຫ້ສ້າງຄະນະກຳມະການ. ສ່ວນແຂວງສະຫວັນນະເຂດນັ້ນ ໄດ້ສະເໜີການຈັດຕັ້ງຜ່ານຫ້ອງການທີ່ມີຢູ່ທີ່ກະທັດລັດກວ່າ. ນອກຈາກນັ້ນ ທີມງານສະເພາະກິດໃນເຂດໂພນທັນ ໄດ້ສະແດງຄວາມຕັ້ງໃຈຢ່າງສູງຕໍ່ແນວຄວາມຄິດ

ຂອງທີມງານສະເພາະກິດຫຼາຍກວ່າທີມງານອື່ນ. ອີກດ້ານນຶ່ງ, ບຸລິມະສິດທີ່ໄດ້ວາງໄວ້ໃຫ້ແກ່ເຂດເນື້ອທີ່ ເຂດໂພນທັນ ແມ່ນຢູ່ໃນອັນດັບນຶ່ງ, ເນື່ອງຈາກໄດ້ຮັບບຸລິມະສິດສູງສຸດໃນ 3 ຕົວອົງປະກອບ ທຽບໃສ່ອົງປະກອບ 5 ອັນ ທີ່ໄດ້ກຳນົດໄວ້.

ຕາມທັດສະນະຕໍ່ການນຳໃຊ້ຊັບພະຍາກອນທີ່ມີຈຳກັດຢູ່ແລ້ວໃນ ສປປ ລາວ ໃຫ້ມີປະສິດທິຜົນສູງ ແລະ ມີພຽງພໍ, ການສຶກສາໄດ້ຕິດຕາມຫຼັກການພື້ນຖານວ່າ ການປະຕິບັດແລະປະສົມປະສານອັນດີເດັ່ນ ທີ່ໄດ້ປະສົບຜ່ານການ ປະຕິບັດ ແນວຄວາມຄິດການພັດທະນາແບບມີຈຸດສຸມໃນເຂດເນື້ອທີ່ອື່ນໆໄປດ້ວຍດີ. ກ່ຽວພັນກັບບັນຫານີ້, ການສຶກສາມີຄຳແນະນຳ ໃຫ້ເລີ່ມຕົ້ນໂຄງການຈາກໂຄງການໂພນທັນ ແລ້ວຈຶ່ງຂະຫຍາຍໄປສູ່ເຂດພື້ນທີ່ຕົວແບບສ່ວນທີ່ເຫຼືອ ຫຼາຍກວ່າຈະ ເລີ່ມຕົ້ນ ສ້າງໂຄງການໄປພ້ອມໆກັນ.